ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

----===000===----

ກະຊວງໂຍທາທິການ ແລະຂົນສົ່ງ

ຄະນະວິຊາການຊ່ວຍວຽກສາມສ້າງກະຊວງ

# ທົ້ວບົດທີ 12

# ບັນດານິຕິກຳຂອງວຽກເຄຫາ-ຜັງເມືອງ ແລະນ້ຳປະປາ

# ຮ່າງຂໍ້ຕົກລົງຂອງເຈົ້າເມືອງ ວ່າດ້ວຍລະບຽບການຄຸ້ມຄອງວຽກງານສຸຂາພິບານໃນຕົວເມືອງ

**ນຳສະເໜີໂດຍ:**
ພະແນກພັດທະນາຕົວເມືອງ, ກົມເຄຫາ ແລະ ຜັງເມືອງ,
ກະຊວງ ໂຍທາທິການ ແລະ ຂົນສົ່ງ

## ຮ່າງຂໍ້ຕົກລົງຂອງເຈົ້າເມືອງ ວ່າດ້ວຍລະບຽບການຄຸ້ມຄອງວຽກງານສຸຂາພິບານ ໃນຕົວເມືອງ

- ຮ່າງຕົວແບບນີ້ ມີ 7 ໝວດ 20 ມາດຕາ;
- ໝວດທີ 1 ບົດບັນຍັດທົ່ວໄປ ມີ 3 ມາດຕາ ວ່າດ້ວຍ ຈຸດປະສົງ, ຂອບເຂດການນຳໃຊ້ ແລະ ນິຍາມຄຳສັບ;
- ໝວດທີ 2 ການກໍ່ສ້າງວິດຖ່າຍ ມີ 3 ມາດຕາ ວ່າດ້ວຍ ປະເພດວິດຖ່າຍ, ມາດຕະຖານຂອງວິດຖ່າຍ ແລະ ການຄັດເລືອກເອົາທີ່ຕັ້ງຂອງຂຸມວິດຊຶມ;
- ໝວດທີ 3 ການບຳບັດ ແລະ ການລະບາຍນ້ຳເປື້ອນ ມີ 5 ມາດຕາ ວ່າດ້ວຍ ການບຳບັດກັບທີ່, ການລະບາຍນ້ຳເປື້ອນໃສ່ຮ່ອງລະບາຍນ້ຳ, ການບຳບັດນ້ຳໂສໂຄກ ແລະ ຕະກອນອາຈົມ, ການບຳບັດນ້ຳເປື້ອນຈາກໂຮງຊ່າງ, ໂຮງງານ ແລະ ສະຖານທີ່ບໍລິການສາທາລະນະສຸກ ແລະ ການບຳບັດນ້ຳເປື້ອນຂັ້ນສຸດທ້າຍ;

## ຮ່າງຂໍ້ຕົກລົງຂອງເຈົ້າເມືອງ ວ່າດ້ວຍລະບຽບການຄຸ້ມຄອງວຽກງານສຸຂາພິບານ ໃນຕົວເມືອງ (ຕໍ່)

- ໝວດທີ 4 ມີ 1 ມາດຕາ ວ່າດ້ວຍ ຄະນະຮັບຜິດຊອບຄຸ້ມຄອງ ແລະ ກວດກາວຽກງານສຸຂາພິບານ;
- ໝວດທີ 5 ມີ 4 ມາດຕາ ວ່າດ້ວຍ ພາລະບົດບາດ ແລະ ໜ້າທີ່ ຂອງຄະນະຮັບຜິດຊອບວຽກງານສຸຂາພິບານປະຈໍາເມືອງ, ພາລະບົດບາດ ແລະ ໜ້າທີ່ ຂອງກອງເລຂາ, ພາລະບົດບາດ ແລະ ໜ້າທີ່ ຂອງຄະນະຮັບຜິດຊອບນໍ້າ ແລະ ສຸຂາພິບານປະຈໍາບ້ານ, ໜ້າທີ່ ແລະພັນທະຂອງພາກສ່ວນອື່ນໆ ທີ່ກ່ຽວຂ້ອງກັບວຽກງານ ສຸຂາພິບານ;
- ໝວດທີ 6 ມີ 2 ມາດຕາ ວ່າດ້ວຍ ນະໂຍບາຍຕໍ່ຜູ້ທີ່ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ;
- ໝວດທີ 7 ບົດບັນຍັດສຸດທ້າຍ ມີ 2 ມາດຕາ ວ່າດ້ວຍ ການຈັດຕັ້ງປະຕິບັດ ແລະ ຜົນສັກສິດ.

## ໝວດທີ I - ບົດບັນຍັດທົ່ວໄປ

- ມາດຕາ 1: ຈຸດປະສົງ ເພື່ອຊຸກຍູ້ສົ່ງ, ຮັບປະກັນໃຫ້ຄຸ້ມຄອງ ແລະ ກວດກາວຽກສຸຂາພິບານໃນຕົວເມືອງ ໃຫ້ຖືກຕ້ອງຕາມຫລັກວິຊາການ ແລະ ມີປະສິດທິຜົນສູງ ໂດຍສະເພາະ ການກໍ່ສ້າງວິດຖ່າຍ ແລະ ຄຸ້ມຄອງນໍ້າເປື້ອນປະເພດຕ່າງໆ ຂອງຕົວເມືອງ ແນໃສ່ປ້ອງກັນສຸຂະພາບຂອງຊຸມຊົນ ແລະ ປົກປັກຮັກສາສິ່ງແວດລ້ອມໃຫ້ຍືນຍົງ;
- ມາດຕາ 2: ຂອບເຂດການນໍາໃຊ້ ຂໍ້ຕົກລົງສະບັບນີ້ ໃຊ້ເພື່ອເປັນບ່ອນອ້າງອີງ ໃນການອອກແບບ, ກໍ່ສ້າງ ແລະ ກວດກາ ການນໍາໃຊ້ວິດຖ່າຍ, ການລະບາຍ ແລະ ບໍາບັດນໍ້າເປື້ອນປະເພດຕ່າງໆ ຂອງທຸກຄົວເຮືອນ, ສໍານັກງານ ອົງການຈັດຕັ້ງ, ໂຮງຊ່າງ, ໂຮງງານ, ອຸດສາຫະກໍາ ແລະ ສະຖານທີ່ຕ່າງໆ ທັງຂອງລັດ ແລະ ເອກະຊົນ, ລວມທັງສະຖານທີ່ບໍາບັດນໍ້າເປື້ອນ ຂັ້ນສຸດທ້າຍ ຢູ່ພາຍໃນຂອບເຂດຂອງຕົວເມືອງ.

## ມາດຕາ 3: ນິຍາມຄຳສັບ

- ນ້ຳເປື້ອນ: ແມ່ນນ້ຳທີ່ໄດ້ຜ່ານການນຳໃຊ້ແລ້ວ ຊຶ່ງຖືກປົນເປື້ອນ ດ້ວຍສານອິນຊີຕ່າງໆ, ຈັດແບ່ງເປັນຫຼາຍປະເພດ ເຊັ່ນ: ນ້ຳເປື້ອນທົ່ວໄປ, ນ້ຳໂສໂຄກ, ນ້ຳເປື້ອນຈາກໂຮງງານ, ອຸດສາຫະກຳ ແລະ ອື່ນໆ.
- ນ້ຳເປື້ອນທົ່ວໄປ: ແມ່ນນ້ຳເປື້ອນທີ່ເກີດຈາກກິດຈະກຳປະຈຳວັນ ເປັນຕົ້ນແມ່ນການປຸງແຕ່ງອາຫານ, ອາບນ້ຳ, ຊັກເຄື່ອງ ແລະ ອື່ນໆ ທີ່ມີທາດ ແລະ ສິ່ງເຈືອປົນຢູ່ນຳເກີນມາດຕະຖານທີ່ກຳນົດໄວ້.
- ນ້ຳໂສໂຄກ: ແມ່ນນ້ຳ ທີ່ເກີດຈາກການອະນາໄມສິ່ງຂັບຖ່າຍອອກຈາກຮ່າງກາຍ ຂອງຄົນເຮົາ ເປັນຕົ້ນແມ່ນ ອາຈົມ, ປັດສະວະ ແລະ ຈາກອູ່ສ້ອມແປງ.
- ນ້ຳເປື້ອນຈາກອຸດສາຫະກຳ: ແມ່ນນ້ຳເປື້ອນ ທີ່ເສຍຄຸນນະພາບ ຈາກກຳມະວິທີການຜະລິດຕ່າງໆ ຂອງໂຮງຊ່າງ ແລະ ໂຮງງານ ເຊັ່ນ: ການລ້າງ, ການອະນາໄມ, ໝໍ້ອາຍນ້ຳ, ລະບົບຄວາມເຢັນ ແລະ ແຫຼ່ງອື່ນໆ.

## ມາດຕາ 3 : ນິຍາມຄຳສັບ (ຕໍ່)

- ຕະກອນອາຈົມ: ໝາຍເຖິງ ອາຈົມ ທີ່ຕົກຕະກອນ ແລະ ນ້ຳເປື້ອນ ທີ່ປັນຈຸ ໃນອ່າງກັ່ນຕອງ.
- ຂຸມຊຶມ: ແມ່ນຂຸມອາຈົມ ຫຼື ນ້ຳເປື້ອນ ຊຶ່ງນ້ຳໂສໂຄກ ຫຼື ນ້ຳເປື້ອນ ສາມາດໄຫຼຊຶມແບບທຳມະຊາດ ເຂົ້າໄປໃນຊັ້ນດິນ ທີ່ຢູ່ອ້ອມແອ້ມບໍລິເວນຂຸມນັ້ນ.
- ວິດຊຶມ: ແມ່ນວິດຖ່າຍ ຊຶ່ງປະກອບດ້ວຍຂຸມຊຶມໜຶ່ງ ຫຼື ສອງຂຸມ, ແຜ່ນພື້ນສຳລັບຕິດຕັ້ງຫົວວິດແບບມີຄໍຫ່ານ ແລະ ທໍ່ລະບາຍອາກາດ. ວິດຖ່າຍປະເພດນີ້ ແມ່ນນຳໃຊ້ນ້ຳ ເພື່ອລ້າງອາຈົມ ແລະ ປັດສະວະໃຫ້ລົງໄປໃນຂຸມເກັບອາຈົມ.
- ວິດມີອ່າງກັ່ນຕອງ: ຄືກັນກັບວິດຊຶມ ຕ່າງແຕ່ວ່າ ມີອ່າງກັ່ນຕອງອາຈົມທີ່ມີ ສອງ ຫຼື ສາມຫ້ອງ (ຫ້ອງເກັບອາຈົມ ພ້ອມທໍ່ລະບາຍອາກາດ, ຫ້ອງບຳບັດອາຈົມ; ຫ້ອງຕອງ) ແລະ ປ່ອງເປີດປິດ ສຳລັບກວດທຳຄວາມສະອາດ ຫຼື ດູດຂີ້ຕະເລ້ ທີ່ຍ່ອຍສະຫຼາຍນັ້ນອອກ.

## ໝວດທີ II - ການກໍ່ສ້າງວິດຖ່າຍ

- **ມາດຕາ 4: ປະເພດວິດຖ່າຍໃນຕົວເມືອງ** ປະເພດວິດຖ່າຍ ທີ່ອະນຸຍາດໃຫ້ນຳໃຊ້ຢູ່ໃນຕົວເມືອງ ມີສອງປະເພດ ຄື: ວິດຊຶມ ແລະ ວິດອ່າງກັນຕອງ. ສຳລັບ ຜູ້ທີ່ມີທຶນຮອນພຽງພໍ ກໍ່ຄວນສ້າງວິດມີອ່າງກັນຕອງເລີຍ.

ບັນດາສະຖານທີ່ສາທາລະນະ ຢູ່ໃນຕົວເມືອງ ເຊັ່ນ: ຕະຫຼາດ, ສະຖານີລົດໂດຍສານ, ສວນສາທາລະນະ, ໂຮງຮຽນ ແລະ ອື່ນໆ, ຕ້ອງມີວິດແບບມີອ່າງກັນຕອງເທົ່ານັ້ນ. ວິດຖ່າຍຢູ່ສະຖານທີ່ດັ່ງກ່າວນີ້ ຕ້ອງແຍກຫ້ອງຖ່າຍສຳລັບ ເພດຍິງ ແລະ ເພດຊາຍ ເພື່ອສະດວກໃນການນຳໃຊ້ ແລະ ໃຫ້ມີຄວາມເປັນສ່ວນຕົວ.

- **ມາດຕາ 5: ມາດຕະຖານຂອງວິດຖ່າຍ** ການອອກແບບກໍ່ສ້າງວິດຖ່າຍແຕ່ລະປະເພດ ຕ້ອງໃຫ້ມີຂະໜາດ ທີ່ເໝາະສົມ ຕາມຈຳນວນຜູ້ຊົມໃຊ້, ຕາມເງື່ອນໄຂ ຂອງແຕ່ລະສະຖານທີ່ ແລະ ປະເພດວັດສະດຸທີ່ກໍ່ສ້າງ, ພ້ອມທັງມີລະບົບຄົບຊຸດ ຕາມແຕ່ລະປະເພດ ເຊິ່ງມາດຕະຖານລະອຽດໃຫ້ເບິ່ງຕາມເອກະສານຊ້ອນທ້າຍ.

## ໝວດທີ II - ການກໍ່ສ້າງວິດຖ່າຍ (ຕໍ່)

**ມາດຕາ 6: ການຄັດເລືອກເອົາທີ່ຕັ້ງ ຂອງຂຸມຊຶມ ແລະ ອ່າງກັ່ນຕອງອາຈົມ** ການຄັດເລືອກທີ່ຕັ້ງທີ່ມີຂຸມຊຶມ ແລະ ອ່າງເກັບອາຈົມ ຕ້ອງໃຫ້ຖືກຕາມເງື່ອນໄຂດັ່ງລຸ່ມນີ້:

- ວິດຖ່າຍສາທາລະນະ ຕ້ອງຕັ້ງຢູ່ໃນດິນສ່ວນລວມ
- ວິດຖ່າຍຂອງສ່ວນຕົວ ຕ້ອງຕັ້ງຢູ່ໃນດິນຂອງເຈົ້າຂອງວິດຖ່າຍນັ້ນເອງ.
- ຕ້ອງຕັ້ງຢູ່ໃນບ່ອນທີ່ນ້ຳບໍ່ສາມາດຖ້ວມໄດ້, ສຳລັບຂຸມຊຶມ ຕ້ອງໄດ້ເອົາໃຈໃສ່ສຶກສາສະພາບຂອງດິນ ໃຫ້ເໝາະສົມຕື່ມອີກ (ດິນຊາຍແກມຕົມ ທີ່ມີອັດຕາໄຫຼທີ່ເໝາະສົມ)
- ຕ້ອງຕັ້ງຢູ່ໄກຈາກນ້ຳສ້າງ, ນ້ຳບາດານ, ນ້ຳຫ້ວຍຕ່າງໆ ຢ່າງໜ້ອຍ 30 ແມັດ; ສຳລັບຫຼັງຄາເຮືອນ ທີ່ບໍ່ມີໄລຍະພຽງພໍ ແມ່ນຈະໄດ້ຮັບການພິຈາລະນາ ເປັນກໍລະນີສະເພາະ.

## ມາດຕາ 6 - ການຄັດເລືອກເອົາທີ່ຕັ້ງຂອງຂຸມຊຶມ ແລະ ອ່າງກັ່ນຕອງອາຈົມ (ຕໍ່)

- ຕ້ອງຕັ້ງຫ່າງຈາກຮາກຖານ ຂອງອາຄານ ຢ່າງໜ້ອຍ 3 ແມັດ; ໃນກໍລະນີວິດມີອ່າງກັ່ນຕອງ ແມ່ນອະນຸຍາດຫ່າງ 1.5 ແມັດກໍໄດ້. ໃນກໍລະນີທີ່ຈໍາເປັນ, ໄລຍະຫ່າງອາດຈະເອົາຫຼຸດລົງກໍໄດ້ ແຕ່ຕ້ອງຮັບປະກັນວ່າ ຈະບໍ່ເປັນອັນຕະລາຍ ຕໍ່ໂຄງສ້າງຂອງອາຄານ.
- ຕ້ອງບໍ່ຕັ້ງຢູ່ກ້ອງທາງ, ລານຈອດລົດ ແລະ ສິ່ງກໍ່ສ້າງທີ່ປົກປິດຖາວອນ.
- ຫ້າມຂຸດວິດຖ່າຍ ຫຼື ຖ່າຍໃສ່ແຫຼ່ງນໍ້າທໍາມະຊາດ.
- ຫ້າມປ່ອຍນໍ້າໂສໂຄກ ແລະ ຕະກອນອາຈົມ ລົງໃສ່ແຫຼ່ງນໍ້າທໍາມະຊາດ ຢູ່ພາຍໃນຕົວເມືອງ.
- ຫ້າມກໍ່ສ້າງລະບົບບໍາບັດນໍ້າເປື້ອນ ໃສ່ຍອດນໍ້າ (ຫົວນໍ້າ) ຫຼື ເທິງສະຖານີດູດນໍ້າ ເພື່ອຜະລິດນໍ້າປະປາຂອງຕົວເມືອງ.

## ໝວດທີ III - ການບໍາບັດແລະການລະບາຍນໍ້າເປື້ອນ

- ມາດຕາ 7: ການບໍາບັດນໍ້າເປື້ອນກັບທີ່ ທຸກໆຫຼັງຄາເຮືອນ, ສໍານັກງານ, ອົງການຈັດຕັ້ງ ແລະ ສະຖານທີ່ຕ່າງໆ ຢູ່ໃນເຂດຕົວເມືອງທີ່ຍັງບໍ່ທັນມີຮ່ອງນໍ້າສາທາລະນະ ຕ້ອງໃຫ້ມີຂຸມວິດຊຶມກັບທີ່ ຫຼື ອ່າງເກັບກັ່ນຕອງ ເພື່ອບໍາບັດນໍ້າເປື້ອນທົ່ວໄປ ຫຼື ບໍາບັດນໍ້າໂສໂຄກຂອງຕົນເອງ. ທີ່ຕັ້ງ ແລະ ຂະໜາດດັ່ງກ່າວ ແມ່ນໃຫ້ເບິ່ງຕາມເອກະສານຊ້ອນທ້າຍ.
- ມາດຕາ 8: ການລະບາຍນໍ້າເປື້ອນໃສ່ຮ່ອງລະບາຍນໍ້າ ຢູ່ໃນຕົວເມືອງ ທີ່ມີລະບົບຮ່ອງລະບາຍນໍ້າສາທາລະນະ, ມີຮ່ອງ ຫຼື ໜອງທໍາມະຊາດ ທີ່ຮອງຮັບນໍ້າເປື້ອນຈາກຕົວເມືອງ, ມີແຕ່ນໍ້າເປື້ອນໃນຕົວເມືອງເທົ່ານັ້ນ ທີ່ອະນຸຍາດໃຫ້ລະບາຍໃສ່ລະບົບດັ່ງກ່າວໄດ້ ແຕ່ກ່ອນຈະລະບາຍ ຕ້ອງເຮັດການບໍາບັດຂັ້ນຕົ້ນດ້ວຍວິທີທີ່ເໝາະສົມເພື່ອໃຫ້ໄດ້ຄ່າມາດຕະຖານຄຸນນະພາບນໍ້າເປື້ອນ ທີ່ອະນຸຍາດລະບາຍໄດ້, ສ່ວນນໍ້າໂສໂຄກ ແມ່ນບໍ່ອະນຸຍາດ.

## ໝວດທີ III - ການບຳບັດແລະການລະບາຍນ້ຳເປື້ອນ (ຕໍ່)

- **ມາດຕາ 9: ການບຳບັດນ້ຳໂສໂຄກ ແລະ ຕະກອນອາຈົມ** ທຸກໆຫຼັງຄາເຮືອນ, ສຳນັກງານ, ອົງການຈັດຕັ້ງ ແລະ ສະຖານທີ່ຕ່າງໆ ຕ້ອງໄດ້ຕິດຕາມ ກວດກາຂຸມຊຶມ ແລະ ອ່າງກັ່ນຕອງຂອງຕົນ ຢ່າງເປັນປົກກະຕິ, ຖ້າຂຸມ ຫຼື ອ່າງດັ່ງກ່າວເຕັມ ຕ້ອງໄດ້ດູດເອົານ້ຳໂສໂຄກ ແລະ ຕະກອນອາຈົມ ອອກໄປບຳບັດ ຢູ່ສະຖານທີ່ບຳບັດນ້ຳເປື້ອນ ຂັ້ນສຸດທ້າຍ ຫຼື ສະຖານທີ່ງເມືອງອະນຸມັດ, ຫ້າມເດັດຂາດບໍ່ໃຫ້ນຳໄປປ່ອຍໃສ່ຮ່ອງລະບາຍນ້ຳ ຫຼື ສິ່ງແວດລ້ອມໃນທຳມະຊາດ.
- **ມາດຕາ 10: ການບຳບັດນ້ຳເປື້ອນຈາກໂຮງຊ່າງ, ໂຮງງານ ແລະ ສະຖານບໍລິການສາທາລະນະສຸກ** ການບຳບັດນ້ຳເປື້ອນຈາກໂຮງຊ່າງ, ໂຮງງານອຸດສາຫະກຳ ແລະ ສະຖານທີ່ສາທາລະນະສຸກ ຕ້ອງແຍກບຳບັດຕ່າງຫາກ ໂດຍປະຕິບັດໃຫ້ສອດຄ່ອງ ຕາມຂໍ້ກຳນົດຂອງຂະແໜງການທີ່ກ່ຽວຂ້ອງ.
- **ມາດຕາ 11: ການບຳບັດນ້ຳເປື້ອນຂັ້ນສຸດທ້າຍ** ກ່ອນຈະປ່ອຍນ້ຳເປື້ອນຂອງຕົວເມືອງ ລົງສູ່ແຫຼ່ງນ້ຳທຳມະຊາດ ຕ້ອງໃຫ້ມີການບຳບັດນ້ຳເປື້ອນຂັ້ນສຸດທ້າຍ, ລະດັບຕ່ຳສຸດ ແມ່ນຕ້ອງຜ່ານຂະບວນການບຳບັດແບບທຳມະຊາດ, ສະຖານທີ່ບຳບັດ ອາດເຮັດຢູ່ບ່ອນດຽວ ຫຼື ຫຼາຍບ່ອນ ແຕ່ຕ້ອງໃຫ້ມີທີ່ຕັ້ງ ທີ່ເໝາະສົມ, ມີການອອກແບບ ແລະ ກໍ່ສ້າງ ໃຫ້ຖືກຫຼັກຕາມວິຊາການ ແລະ ສອດຄ່ອງກັບຂໍ້ກຳນົດຂອງຂະແໜງການທີ່ກ່ຽວຂ້ອງ.

## ໝວດທີ IV - ຄະນະຮັບຜິດຊອບຄຸ້ມຄອງ ແລະ ກວດກາວຽກງານສຸຂາພິບານ

**ມາດຕາ 12: ຄະນະຮັບຜິດຊອບຄຸ້ມຄອງ ແລະກວດກາວຽກງານສຸຂາພິບານ** ຄະນະຮັບຜິດຊອບຄຸ້ມຄອງ ແລະກວດກາວຽກງານສຸຂາພິບານໃນຕົວເມືອງ ມີສອງຂັ້ນ ຄື: ຂັ້ນເມືອງ ແລະ ຂັ້ນບ້ານ.

**ຂັ້ນເມືອງ:** ເອີ້ນວ່າ ຄະນະຮັບຜິດຊອບຄຸ້ມຄອງ ແລະກວດກາວຽກງານສຸຂາພິບານ ປະຈຳເມືອງ ຊຶ່ງມີກອງເລຂາ ເປັນຜູ້ຊ່ວຍວຽກ ແລະ ປະກອບດ້ວຍ ພາກສ່ວນລຸ່ມນີ້:

- ຫົວໜ້າ ຫລື ຮອງ ຫ້ອງການ ຍທຂ ເມືອງ — ເປັນຫົວໜ້າ
- ຫົວໜ້າ ຫລື ຮອງ ຫ້ອງການ ສາທາລະນະສຸກເມືອງ — ເປັນຮອງຫົວໜ້າ
- ຫົວໜ້າ ຫລື ຮອງ ຫ້ອງການ ສິ່ງແວດລ້ອມເມືອງ — ເປັນຄະນະ
- ຫົວໜ້າ ຫລື ຮອງ ຫ້ອງການ ສຶກສາເມືອງ — ເປັນຄະນະ
- ຫົວໜ້າ ຫລື ຮອງ ສະຫະພັນແມ່ຍິງເມືອງ — ເປັນຄະນະ
- ຄະນະພັດທະນາກຸ່ມບ້ານ — ເປັນຄະນະ
- ບັນດານາຍບ້ານ — ເປັນຄະນະ
- ເຈົ້າເມືອງ ເປັນຜູ້ແຕ່ງຕັ້ງ ຄະນະຮັບຜິດຊອບຄຸ້ມຄອງ ແລະ ກວດກາວຽກງານສຸຂາພິບານ ປະຈຳເມືອງ ແລະ ກອງເລຂາ.

## ມາດຕາ 12 - ຄະນະຮັບຜິດຊອບຄຸ້ມຄອງ ແລະ ກວດກາ ວຽກງານສຸຂາພິບານ (ຕໍ່)

- **ຂັ້ນບ້ານ:** ເອີ້ນວ່າ ຄະນະຮັບຜິດຊອບ ຄຸ້ມຄອງ ແລະ ກວດກາ ວຽກງານນໍ້າ ແລະ ສຸຂາພິບານ ປະຈໍາບ້ານ ຊຶ່ງປະກອບດ້ວຍ ພາກສ່ວນ ດັ່ງຕໍ່ໄປນີ້:
- ຮອງນາຍບ້ານ ເປັນຫົວໜ້າ
- ຄະນະແນວໂຮມບ້ານ ເປັນຮອງຫົວໜ້າ
- ຄະນະຊາວໜຸ່ມບ້ານ ເປັນຄະນະ
- ຄະນະສະຫະພັນແມ່ຍິງບ້ານ ເປັນຄະນະ
- ໂຍທາທິການ ແລະ ຂົນສົ່ງບ້ານ ເປັນຄະນະ
- ອາສາສະໝັກບ້ານ ເປັນຄະນະ
- ຕົວແທນນັກທຸລະກິດ ໃນບ້ານທີ່ກ່ຽວຂ້ອງ ເປັນຄະນະ
- ຫົວໜ້າຫ້ອງວ່າການເມືອງ ເປັນຜູ້ແຕ່ງຕັ້ງ ຄະນະຮັບຜິດຊອບ ຄຸ້ມຄອງ ແລະ ກວດກາວຽກງານ ແລະ ສຸຂາພິບານປະຈໍາບ້ານ.

## ໝວດທີ V - ພາລະບົດບາດ, ໜ້າທີ່ ແລະ ພັນທະຂອງທຸກ ພາກສ່ວນທີ່ກ່ຽວຂ້ອງກັບວຽກງານສຸຂາພິບານ

### ມາດຕາ 13: ພາລະບົດບາດ ແລະ ໜ້າທີ່ຂອງຄະນະຮັບຜິດຊອບວຽກງານ ສຸຂາພິບານ ປະຈໍາເມືອງ

- ຈັດຕັ້ງເຜີຍແຜ່ ລະບຽບກົດໝາຍ, ຫຼັກວິຊາການ ແລະ ແຜນການ ກ່ຽວ ກັບວຽກງານສຸຂາພິບານ ຢູ່ໃນຂັ້ນເມືອງ ເພື່ອໃຫ້ທຸກພາກສ່ວນໃນຕົວ ເມືອງ ໄດ້ຮັບຮູ້ ແລະ ເຂົ້າໃຈ ຢ່າງເລິກເຊິ່ງ.
- ປູກລະດົມ ແລະ ຕິດຕາມຊຸກຍູ້ ທຸກພາກສ່ວນໃນຕົວເມືອງ ໃນການ ປະຕິບັດໜ້າທີ່ ແລະ ພັນທະຂອງຕົນ ກ່ຽວກັບວຽກງານສຸຂາພິບານ.
- ປະສານສົມທົບ ກັບອົງການຈັດຕັ້ງ ແລະ ພາກສ່ວນທີ່ກ່ຽວຂ້ອງຕ່າງໆ ເພື່ອວາງແຜນການ ແລະ ຈັດຕັ້ງການເຄື່ອນໄຫວ ຄຸ້ມຄອງ ແລະ ກວດ ກາ ວຽກງານສຸຂາພິບານ ໃນຕົວເມືອງ ໃຫ້ໄດ້ຮັບຜົນດີ.
- ຄົ້ນຄວ້າຂຶ້ນແຜນການ ແລະ ນໍາສະເໜີ ທ່ານເຈົ້າເມືອງ ເພື່ອຮັບຮອງ ເອົາ ແລະ ຂົນຂວາຍທຶນຮອນ ມາກໍ່ສ້າງ, ປັບປຸງ ແລະ ບົວລະບັດ ຮັກສາ ລະບົບຮ່ອງລະບາຍນໍ້າສາທາລະນະ, ແຫຼ່ງນໍ້າທໍາມະຊາດ ແລະ ສະຖານທີ່ບໍາບັດນໍ້າເປື້ອນຂອງຕົວເມືອງ ຂອງຕົນ.

## ມາດຕາ 13 - ພາລະບົດບາດ ແລະ ໜ້າທີ່ຂອງຄະນະ ຮັບຜິດຊອບວຽກງານສຸຂາພິບານ ປະຈຳເມືອງ (ຕໍ່)

- ຊີ້ນຳ ແລະ ກວດກາ ການເຄື່ອນໄຫວ ແລະ ການປະຕິບັດ ຫນ້າທີ່ ຂອງຄະນະຮັບຜິດຊອບນ້ຳ ແລະ ສຸຂາພິບານ ຢູ່ໃນ ແຕ່ລະບ້ານ ທີ່ຂື້ນກັບເມືອງຂອງຕົນ.
- ຕິດຕາມ, ກວດກາ, ປະເມີນຜົນ ແລະ ຈັດອັນດັບບ້ານ, ສຳນັກງານ ແລະ ອົງການຈັດຕັ້ງ ກ່ຽວກັບການປະຕິບັດວຽກ ງານສຸຂາພິບານ ແລະ ລາຍງານ ສະພາບການ ໃຫ້ ເຈົ້າເມືອງ ຮັບຊາບ.
- ຄົ້ນຄ້ວານຳສະໜີ ອົງການປົກຄອງເມືອງ ຈັດຕັ້ງ ການຍ້ອງ ຍໍ ຕໍ່ຜູ້ທີ່ມີຜົນງານ ດີເດັ່ນ ແລະ ປະຕິບັດ ມາດຕະການ ຕໍ່ ຜູ້ລະເມີດ ຕາມຄວາມເໝາະສົມ.

## ໝວດທີ V - ພາລະບົດບາດ, ໜ້າທີ່ ແລະ ພັນທະຂອງ ທຸກພາກສ່ວນທີ່ກ່ຽວຂ້ອງກັບວຽກງານສຸຂາພິບານ (ຕໍ່)

- ມາດຕາ 14: ພາລະບົດບາດ ແລະ ໜ້າທີ່ຂອງກອງເລຂາ ກອງເລຂາ ມີ ພາລະບົດບາດ ແລະ ໜ້າທີ່ ເປັນໃຈກາງ ໃນການປະສານງານ ທຸກວຽກ ງານ ຂອງຄະນະຮັບຜິດຊອບຄຸ້ມຄອງ, ແລະ ກວດກາວຽກງານສຸຂາພິບານ ປະຈຳເມືອງ ພ້ອມທັງລາຍງານການເຄື່ອນໄຫວ ປະຈຳເດືອນ, ສາມເດືອນ ແລະ ປະຈຳປີ ໃຫ້ແກ່ເຈົ້າເມືອງຮັບຊາບ.
- ຈັດຕັ້ງເຜີຍແຜ່ ລະບຽບກົດໝາຍ, ຫຼັກວິຊາການ ແລະ ແຜນການ ກ່ຽວ ກັບວຽກງານສຸຂາພິບານ ໃຫ້ທຸກຄອບຄົວ ແລະ ທຸກຄົນ ພາຍໃນບ້ານ ຂອງຕົນ ໄດ້ຮັບຮູ້, ເຂົ້າໃຈ ຢ່າງເລິກເຊິ່ງ ແລະ ນຳໄປ ຈັດຕັ້ງປະຕິບັດ ຢ່າງຖືກຕ້ອງ.
- ປຸກລະດົມ, ຕິດຕາມຊຸກຍູ້ ແລະ ກວດກາ ທຸກຄອບຄົວ ແລະ ທຸກຄົນ ພາຍໃນບ້ານຂອງຕົນ ໃນການປະຕິບັດໜ້າທີ່ ແລະ ພັນທະຂອງຕົນ ກ່ຽວ ກັບວຽກງານສຸຂາພິບານ.
- ວາງແຜນ ນຳພາ ການຈັດຕັ້ງປະຕິບັດ, ຄຸ້ມຄອງ ແລະ ກວດກາການ ກໍ່ສ້າງວິດຖ່າຍ, ລະບົບລະບາຍນ້ຳເປື້ອນ ຂອງທຸກພາກສ່ວນ ພາຍໃນ ບ້ານ ໂດຍສອດຄ່ອງກັບແຜນການເຄື່ອນໄຫວ ຂອງຂັ້ນບ້ານ.

## ມາດຕາ 15: ພາລະບົດບາດ ແລະ ໜ້າທີ່ຂອງຄະນະຮັບຜິດຊອບນ້ຳ ແລະ ສຸຂາພິບານ

- ສະຫຼຸບລາຍງານ ສະພາບການເຄື່ອນໄຫວວຽກງານສຸຂາພິບານ ປະຈຳເດືອນ, 3 ເດືອນ, 6 ເດືອນ ແລະ ປະຈຳປີ ສົ່ງໃຫ້ຄະນະຮັບຜິດຊອບວຽກງານສຸຂາພິບານໃນຕົວເມືອງ ແລະ ນາຍບ້ານ ຢ່າງເປັນປົກກະຕິ.
- ທຸກໆ 3 ເດືອນ ຕ້ອງລົງກວດກາວຽກງານສຸຂາພິບານ ຢູ່ທຸກຫຼັງຄາເຮືອນ, ສຳນັກງານ, ອົງການຈັດຕັ້ງ ແລະ ສະຖານທີ່ຕ່າງໆ ທີ່ຕັ້ງຢູ່ພາຍໃນຂອບເຂດບ້ານຂອງຕົນເອງ ຮັບຜິດຊອບ ເພື່ອຮັບປະກັນວ່າ ປະຊາຊົນທີ່ຢູ່ອາໄສໃນຂອບເຂດຂອງຕົນໄດ້ປະຕິບັດໜ້າທີ່ ແລະ ພັນທະຂອງຕົນ ຕາມຂໍ້ຕົກລົງສະບັບນີ້.
- ໃນການກວດກາ ແຕ່ລະຄັ້ງ ຕ້ອງມີການຕີລາຄາ ແລະ ຈັດປະເພດຄອບຄົວ ກ່ຽວກັບການປະຕິບັດວຽກງານສຸຂາພິບານ ແລ້ວແຈ້ງຜົນຈັດປະເພດ ແລະ ແນະນຳ ວິທີປັບປຸງແກ້ໄຂບັນຫາໃຫ້ຄອບຄົວ ທີ່ກ່ຽວຂ້ອງຮັບຊາບ ແລະ ຈັດຕັ້ງປະຕິບັດ.
- ພາຍຫຼັງການກວດກາ 1 ອາທິດ ຕ້ອງສະຫຼຸບລາຍງານ ສະພາບການກ່ຽວກັບສຸຂາພິບານພາຍໃນບ້ານ ໃຫ້ນາຍບ້ານ ແລະ ຄະນະຮັບຜິດຊອບຄຸ້ມຄອງ ແລະ ກວດກາວຽກງານສຸຂາພິບານໃນຕົວເມືອງ ຮັບຊາບ.
- ສະເໜີໃຫ້ຂັ້ນເມືອງ ຍ້ອງຍໍຜູ້ທີ່ມີຜົນງານດີເດັ່ນ, ສຶກສາອົບຮົມ ແລະ ປັບໄໝຜູ້ທີ່ລະເມີດ ລວມທັງ ແນະນຳໃຫ້ມີການປັບປຸງແກ້ໄຂບັນຫາ ທີ່ເກີດຂື້ນ ໃຫ້ທັນການ.

## ໝວດທີ V - ພາລະບົດບາດ, ໜ້າທີ່ ແລະ ພັນທະຂອງທຸກພາກສ່ວນທີ່ກ່ຽວຂ້ອງກັບວຽກງານສຸຂາພິບານ (ຕໍ່)

**ມາດຕາ 16: ໜ້າທີ່ ແລະ ພັນທະ ຂອງພາກສ່ວນອື່ນໆ ທີ່ກ່ຽວຂ້ອງກັບວຽກງານສຸຂາພິບານ** ທຸກໆຄົວເຮືອນ, ຫົວໜ່ວຍທຸລະກິດ, ສຳນັກງານອົງການຕ່າງໆ ມີໜ້າທີ່ບຳບັດ ແລະ ປ່ອຍຖິ້ມນ້ຳເປື້ອນ ທີ່ມີຢູ່ໃນຂອບເຂດ ທີ່ຕົນຮັບຜິດຊອບ ຢ່າງປອດໄພ ເພື່ອບໍ່ໃຫ້ມີຜົນກະທົບຕໍ່ຜູ້ທີ່ຢູ່ໃກ້ຄຽງ ແລະ ສະພາບແວດລ້ອມ. ສະນັ້ນ, ທຸກຄອບຄົວ, ທຸກອົງການຈັດຕັ້ງ ແລະ ຫົວໜ່ວຍທຸລະກິດຕ່າງໆ ທັງພາກລັດ ແລະ ເອກະຊົນ ລວມທັງປະຊາຊົນທົ່ວໄປ ທີ່ຢູ່ໃນຕົວເມືອງ ມີໜ້າທີ່ ແລະ ພັນທະ ດັ່ງນີ້:

- ກໍ່ສ້າງ ຫຼື ປັບປຸງ ວິດຖ່າຍ, ຮ່ອງລະບາຍນ້ຳ, ຂຸມຊຶມ ຫຼື ລະບົບບຳບັດ ນ້ຳເປື້ອນຂອງຕົນເອງໃຫ້ຖືກຕ້ອງຕາມມາດຕະຖານ ກ່ອນທີ່ຈະໄດ້ຮັບອະນຸຍາດ ໃຫ້ຕໍ່ນ້ຳປະປາໄດ້.
- ນຳໃຊ້ ແລະ ບົວລະບັດຮັກສາ ວິດຖ່າຍ, ຮ່ອງລະບາຍນ້ຳ, ຂຸມຊຶມ ຫຼື ລະບົບບຳບັດນ້ຳເປື້ອນ ຂອງຕົນເອງ ໃຫ້ສະອາດຈົບງາມ ແລະ ຖືກຕ້ອງ ຕາມຫຼັກສຸຂາພິບານ.
- ຕິດຕາມ ກວດກາ ແລະ ແກ້ໄຂບັນຫານ້ຳເປື້ອນ ທີ່ປ່ອຍອອກຈາກຄອບຄົວ, ສຳນັກງານ, ອົງການຈັດຕັ້ງ ແລະ ສະຖານທີ່ຕ່າງໆ ເພື່ອບໍ່ໃຫ້ມີຜົນກະທົບຕໍ່ຜູ້ທີ່ຢູ່ໃກ້ຄຽງ ແລະ ສິ່ງແວດລ້ອມ.
- ຍິນດີ ຈ່າຍຄ່າບໍລິການ ຫຼື ຄ່າບໍລິການສຳລັບການດູດຂຸມຊຶມ ຫຼື ອ່າງກັ່ນຕອງໃຫ້ແກ່ຜູ້ບໍລິການ.
- ປະກອບສ່ວນໃນການກໍ່ສ້າງ ແລະ ບົວລະບັດຮັກສາລະບົບຮ່ອງລະບາຍນ້ຳສາທາລະນະ, ຮ່ອງ ຫຼື ໜອງນ້ຳທຳມະຊາດ ແລະ ສະຖານທີ່ຕົວເມືອງ.

## ໝວດທີ VI - ນະໂຍບາຍຕໍ່ຜູ້ທີ່ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

- **ມາດຕາ 17: ນະໂຍບາຍຕໍ່ຜູ້ມີຜົນງານ** ບຸກຄົນ, ຄອບຄົວ ແລະ ການຈັດຕັ້ງ ທີ່ມີຜົນງານດີເດັ່ນ ເປັນແບບຢ່າງ ໃນການປະຕິບັດໜ້າທີ່ ແລະ ພັນທະ ກ່ຽວກັບວຽກງານສຸຂາພິບານ ຕາມຂໍ້ຕົກລົງສະບັບນີ້ ຢ່າງຕັ້ງໜ້າ ຈະໄດ້ຮັບການຍ້ອງຍໍ ແລະ ນະໂຍບາຍຈາກ ອົງການຈັດຕັ້ງ ທີ່ກ່ຽວຂ້ອງ ຕາມຄວາມເໝາະສົມ.
- **ມາດຕາ 18: ມາດຕະການຕໍ່ຜູ້ລະເມີດ** ບຸກຄົນ, ຄອບຄົວ ແລະ ການຈັດຕັ້ງ ທີ່ລະເມີດຂໍ້ຕົກລົງສະບັບນີ້ ຈະຖືກກ່າວເຕືອນ, ສຶກສາອົບຮົມ, ປັບໃໝ ຫຼື ໃຫ້ໃຊ້ແທນ ຄ່າເສຍຫາຍ ທີ່ຕົນໄດ້ກໍ່ຂຶ້ນ ຕາມກໍລະນີໜັກ ຫຼື ເບົາ. ກໍລະນີເກີດຄວາມເສຍຫາຍ ຢ່າງຮ້າຍແຮງ ຕໍ່ຊີວິດ ແລະ ຊັບສິນ ຂອງຜູ້ອື່ນ ແລະ ສະພາບແວດລ້ອມ ຕ້ອງຖືກລົງໂທດ ຕາມກົດໝາຍ.

## ໝວດທີ VIII - ບົດບັນຍັດສຸດທ້າຍ

**ມາດຕາ 19: ການຈັດຕັ້ງປະຕິບັດ**

ຫ້ອງວ່າການເມືອງ ເປັນຜູ້ຊີ້ນຳ ການຈັດຕັ້ງປະຕິບັດ ຂໍ້ຕົກລົງສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 20: ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ແລະ ນຳໃຊ້ໄດ້ ນັບຕັ້ງແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

# ການຄຸ້ມຄອງນ້ຳເປື້ອນໃນຕົວເມືອງ

ນຳສະເໜີໂດຍ:

- **ບຸນທົງ ແກ້ວຫານາມ** ຫົວໜ້າພະແນກພັດທະນາຕົວເມືອງ,
- **ພຸດທະສົມ ອິນທະວົງ** ຮອງຫົວໜ້າພະແນກພັດທະນາຕົວເມືອງ
- **ວິຣະຈິດ ດວງຈັນ** ຫົວໜ້າຂະແໜງຄຸ້ມຄອງສິ່ງແວດລ້ອມ ແລະ ພັດທະນາຊຸມຊົນ, ພະແນກພັດທະນາຕົວເມືອງ
- ກົມເຄຫາ ແລະ ຜັງເມືອງ, ກະຊວງ ໂຍທາທິການ ແລະ ຂົນສົ່ງ

1

## ນິຍາມນ້ຳເປື້ອນ

- **ນ້ຳຂີ້ສີກ** ແມ່ນນ້ຳເປື້ອນທີ່ເກີດຈາກກິດຈະກຳການໃຊ້ ນ້ຳຂອງຄົນເຮົາ ເປັນຕົ້ນ ແມ່ນການປຸງແຕ່ງອາຫານ, ອາບນ້ຳ, ຊັກເຄື່ອງນຸ່ງຫົ່ມ ໃນທາງວິຊາການເອີ້ນວ່ານ້ຳສີໝົ່ນ
- **ນ້ຳໂສໂຄກ** ແມ່ນນ້ຳເປື້ອນທີ່ເກີດຈາກການຂັບຖ່າຍຂອງຄົນເຮົາ ລວມມີ ປັດສະວະ, ອາຈົມ ແລະ ນ້ຳທີ່ໃຊ້ລ້າງ ໃນທາງວິຊາການ ເອີ້ນວ່າ ນ້ຳສີດຳ
- **ນ້ຳເປື້ອນ** = ນ້ຳຂີ້ສີກ + ນ້ຳໂສໂຄກ

2

## ນິຍາມນ້ຳເປື້ອນ (ຕໍ່)

- **ການບຳບັດນ້ຳເປື້ອນ** ແມ່ນຂະບວນການເອົາສານປົນເປື້ອນ ອອກຈາກນ້ຳເປື້ອນ ມີ 3 ຂະບວນການ ຄື: ຂະບວນການທາງກາຍະພາກ, ເຄມີສາດ ແລະ ຊີວະວິທະຍາ ຈຸດປະສົງ ແມ່ນເພື່ອປົກປັກຮັກສາສິ່ງແວດລ້ອມ ແລະ ປ້ອງກັນມົນລະພິດ
- **ການກຳຈັດນ້ຳເປື້ອນ** ແມ່ນການເຮັດໃຫ້ນ້ຳເປື້ອນໝົດໄປ ຄືໃນເມື່ອຜ່ານການບຳບັດແລ້ວ ກໍຈະໄດ້ລະບາຍນ້ຳເປື້ອນລົງສູ່ແມ່ນ້ຳ, ຄອງຊົນລະປະທານ, ສ່ວນຂີ້ຕົມແຫລວ ກໍຈະໄດ້ທຳການກຳຈັດຕໍ່ໄປ (ຕາກແຫ້ງເຮັດຝຸ່ນ)
- **ມາດຕະຖານຄຸນນະພາບນ້ຳເປື້ອນ** ແມ່ນການກຳນົດຄ່າຕົວຊີ້ວັດຕ່າງໆ ທີ່ຈຳເປັນ ເພື່ອບໍ່ເປັນການທຳລາຍສິ່ງແວດລ້ອມ ຊຶ່ງການກຳນົດຄ່າ ແມ່ນອີງຕາມ ລະດັບການຂະຫຍາຍຕົວ ທາງດ້ານເສດຖະກິດຂອງປະເທດ ໃນແຕ່ລະໄລຍະ (ບໍ່ຄວນກຳນົດເຄັ່ງຄັດເກີນໄປ ເພາະຈະເຮັດໃຫ້ສູນເສຍເງິນຫລາຍເພື່ອບຳບັດນ້ຳເປື້ອນ)

3

## ລະບົບນ້ຳເປື້ອນ

- ນ້ຳເປື້ອນຈາກຕົວເມືອງ ປົກກະຕິ ຈະຖືກລຳລຽງຜ່ານທໍ່/ຮ່ອງລະບາຍລວມ/ທໍ່ແຍກ ຫລັງຈາກນັ້ນ ຈຶ່ງນຳໄປບຳບັດຢູ່ໜອງບຳບັດນ້ຳເປື້ອນ ຫລື ໂຮງງານບຳບັດນ້ຳເປື້ອນ ຂອງຕົວເມືອງ. ນ້ຳເປື້ອນ ທີ່ຜ່ານການບຳບັດແລ້ວ ຈະໄດ້ລະບາຍລົງສູ່ແມ່ນ້ຳ. ສ່ວນນ້ຳເປື້ອນ ທີ່ເກີດຂຶ້ນໃນພື້ນທີ່ ທີ່ບໍ່ມີລະບົບນ້ຳເປື້ອນແບບລວມສູນ ຈະໄດ້ກຳຈັດໂດຍໃຊ້ລະບົບກຳຈັດນ້ຳເປື້ອນກັບທີ່ (ວິດແຫ້ງ, ວິດປຽກ, ຂຸມວິດຊຶມ, ລະບົບ DEWATS)

4

## ປະເພດນ້ຳເປື້ອນ

- ທີ່ພັກອາໄສ (ນ້ຳຂີ້ສິກ, ນ້ຳໂສໂຄກ)
- ເຂດການຄ້າ
- ສະຖາບັນ
- ຕົວເມືອງ (ນ້ຳເປື້ອນທີ່ເກີດຈາກທີ່ພັກອາໄສ, ເຂດການຄ້າ, ສະຖາບັນ, ອຸດສາຫະກຳ, ນ້ຳຝົນ, etc.)

5

## ຕົວຢ່າງການສຶກສາ

ນ້ຳເປື້ອນທີ່ປ່ອຍອອກຈາກຄົວເຮືອນໄຫລລົງສູ່ຮ່ອງລະບາຍນ້ຳໂດຍປາສະຈາກການບຳບັດ



6

## ແຫລ່ງນ້ຳເປື້ອນ

- <u>**ສິ່ງເສດເຫລືອເກີດຈາກການຂັບຖ່າຍຂອງມະນຸດ**</u> (ອາຈົມ, ປັດສະວະ, ເຈ້ຍອະນາໄມ, ນ້ຳທີ່ໃຊ້ລ້າງ)
- <u>**ຂຸມພັກນ້ຳເປື້ອນ**</u> (Cesspit, cesspool)
- <u>**ຂຸມວິດຊຶມ**</u> (Septic tank effluent)
- <u>**ໂຮງງານບຳບັດນ້ຳເປື້ອນ**</u> (Discharge)
- <u>**ນ້ຳລ້າງ**</u> (ນ້ຳອາບ, ຊັກເຄື່ອງ, ອະນາໄມພື້ນ, ລ້າງຖ້ວຍຊາມ, etc.)
- <u>**ນ້ຳຝົນ**</u> (ຮາງລິນ, ເດີ່ນບ້ານ, ຮ່ອງລະບາຍນ້ຳແຄມທາງ, ຮ່ອງລະບາຍນ້ຳ, etc.)

7

## ແຫລ່ງນ້ຳເປື້ອນ (ຕໍ່)

- <u>**ນ້ຳໃຕ້ດິນ**</u> ທີ່ຊຶມເຂົ້າລະບົບທໍ່ລຳລຽງນ້ຳເປື້ອນ
- <u>**ສິ່ງເສດເຫລືອທີ່ເປັນທາດແຫລວຈາກທີ່ພັກອາໄສ**</u> (ເຄື່ອງດື່ມ, ນ້ຳມັນປຸງແຕ່ງອາຫານ, ຢາປາບສັດຕູພືດ, ນ້ຳມັນເຄື່ອງ, ນ້ຳສີ, ນ້ຳຢາອະນາໄມ, etc.)
- <u>**ຮ່ອງລະບາຍນ້ຳຈາກໂຮງງານອຸດສາຫະກຳ**</u> (ຕ້ອງເຮັດການບຳບັດຂັ້ນຕົ້ນກ່ອນ ເພື່ອບໍ່ທຳລາຍທໍ່ ແລະ ຂະບວນການບຳບັດ)

8

## ສະພາບທົ່ວໄປຂອງລະບົບສຸຂາພິບານໃນປັດຈຸບັນ



9

## ສ່ວນປະກອບຂອງນ້ຳເປື້ອນ

- **<u>ນ້ຳ</u>** (ສູງກວ່າ 95%) ຊຶ່ງຖືກຕື່ມໃສ່ໃນເວລາຊັກໂຄກນ້ຳໂສໂຄກ ເພື່ອລຳລຽງລົງສູ່ທໍ່ລະບາຍ
- <u>Pathogen</u> ເຊັ່ນ: bacteria, viruses, prion (ອະນຸພາກໂປຣຕີນຕິດເຊື້ອ), ໄຂ່ຂີ້ກະຕືກ
- **<u>ອະນຸພາກອິນຊີ</u>** ເຊັ່ນ: ອາຈົມ, ເສດອາຫານ, ເຈ້ຍອະນາໄມ, etc.
- **<u>ວັດສະດຸອິນຊີລະລາຍ</u>** ເຊັ່ນ: ຢູເຣຍ, ນ້ຳຕານໃນໝາກໄມ້, ໂປຣຕີນລະລາຍ, ຢາປົວພະຍາດ...
- **<u>ອະນຸພາກອະນົນຊີ</u>** ເຊັ່ນ: ດິນຊາຍ, ຫີນແຮ່, ອະນຸພາກຂອງໂລຫະຕ່າງໆ, ກະເບື້ອງ ...
- **<u>ວັດສະດຸອະນົນຊີລະລາຍ</u>** ເຊັ່ນ: ແອມໂມເນຍ, ໄຊຢາໄນ, ໄຮໂດຣເຈນຊັນໄຟ, ໄທໂອໄຊຢາໄນ, ໄທໂອຊັນເຟດ ...

10

## ສ່ວນປະກອບຂອງນ້ຳເປື້ອນ (ຕໍ່)

- **ສັດຕ່າງໆ** ເຊັ່ນ: ໂປຣໂຕຊົວ, ແມງໄມ້, ສັດຂາປ້ອງ (arthropod), ປານ້ອຍ ...
- **ທາດແຂງຂະໜາດໃຫຍ່** ເຊັ່ນ: ຜ້າອະນາໄມ, ຜ້າອ້ອມ, ຖົງຢາງອະນາໄມ, ເຂັມສັກຢາ, ເຄື່ອງຫລິ້ນເດັກນ້ອຍ, ຊາກສັດຕາຍ ຫລື ພືດຕ່າງໆ
- **ອາຍແກັດຕ່າງໆ** ເຊັ່ນ: ໄຮໂດຣເຈນ ຊັນໄຟ, ຄາບອນໄດອັອກໄຊ, ມີເທນ ...
- Emulsion ເຊັ່ນ: ນ້ຳສີ, ກາວ, ມາຍອນແນ, ສີຜົມ ...
- Toxin ເຊັ່ນ: ຢາປາບສັດຕູພືດ, ຢາເບື່ອ, ຢາຂ້າຫຍ້າ ...
- **ຢາປົວພະຍາດຕ່າງໆ ແລະ ຮໍໂມນ**

11

## ຕົວຢ່າງປະລິມານການຜະລິດນ້ຳເປື້ອນ

| ລຳດັບ | ການໃຊ້ນ້ຳສະອາດ | ອັດຕາການໃຊ້ນ້ຳ (ລິດ/ຄົນ/ວັນ) |
|---|---|---|
| 1 | ດື່ມ ແລະ ປຸງແຕ່ງອາຫານ | 5 |
| 2* | ລ້າງຖ້ວຍຊາມ ແລະ ອະນາໄມ | 14 |
| 3* | ຊັກເຄື່ອງນຸ່ງຫົ່ມ | 14 |
| 4* | ອະນາໄມສ່ວນຕົວ ແລະ ອາບນ້ຳ | 45 |
| 5 | ລ້າງວິດຖ່າຍ | 50 |
| 6* | ທົດສອບ ແລະ ພັກຜ່ອນ | 5 |
| 7 | ສູນເສຍໃນການແຈກຢາຍ | 23 |
| | ລວມທັງໝົດ | 156 |
| ປະລິມານນ້ຳເປື້ອນທັງໝົດ = 14+14+45+2 = 75 ລິດ/ຄົນ/ວັນ | | |

12

## ຕົວຊີ້ວັດຄຸນນະພາບນ້ຳເປື້ອນ

- ຄຸນລັກສະນະດ້ານກາຍະພາກ (ອຸນຫະພູມ, ສີ, ກິ່ນ, ທາດແຂງຕ່າງໆ, ຄວາມໜາແໜ້ນ, ຄວາມໜຽວ, ການນຳໄຟຟ້າ, ກຳມັນຕະພາບລັງສີ ...)
- ຄຸນລັກສະນະດ້ານເຄມີສາດ (pH, Oxidation-reduction potential, ຄວາມເປັນດ່າງ, ຄວາມເປັນກົດ, ຄວາມກະດ້າງ, ອອກຊີເຈນລະລາຍ, BOD, COD, permanganate value, ຄາບອນອິນຊີທັງໝົດ (TOC), ໄນໂຕຣເຈນ, ຄລໍໄຣ, ຊັນເຟດ, ຟອດສະເຟດ, etc.
- ຄຸນລັກສະນະດ້ານຊີວະວິທະຍາ (Algae, bacteria, helminthes, protozoa, viruses, etc.

13

## ຜົນກະທົບຈາກນ້ຳເປື້ອນຕໍ່ກັບສຸຂະພາບ

- ບົດລາຍງານຂອງອົງການອະນາໄມໂລກ ແລະ ຍູນິເຊັບ ປີ 2010 ລາຍງານວ່າ: **ປະຊາຊົນລາວ 2.9 ລ້ານຄົນ** ແມ່ນຍັງບໍ່ທັນເຂົ້າເຖິງສຸຂາພິບານທີ່ປອດໄພ. **ການຂາດແຄນວິດຖ່າຍ, ສຸຂາພິບານທີ່ຖືກຕ້ອງ ແລະ ລະບົບບຳບັດນ້ຳເປື້ອນ** ເຮັດໃຫ້ປະຊາຊົນປະສົບກັບບັນຫາການປົນເປື້ອນ ຂອງເຊື້ອພະຍາດ ຈາກອາຈົມ, ເຊື້ອພະຍາດຈາກແຫລ່ງນ້ຳເປື້ອນ ກັບແຫລ່ງນ້ຳ ເພື່ອໃຊ້ ແລະ ດື່ມ ເຮັດໃຫ້ເກີດເປັນ ພະຍາດຖອກທ້ອງ, ໂລກອະຫິວາ, ໂລກຜິວໜັງ, ໄຂ້ໝາກເຫລືອງ, ໂລກທ້ອງບິດ, ເຊື້ອແມ່ທ້ອງ ທີ່ເປັນອັນຕະລາຍຕໍ່ສຸຂະພາບ ຢ່າງກ້ວາງຂວາງ.

14

## ຜົນກະທົບຈາກນໍ້າເປື້ອນຕໍ່ກັບສຸຂະພາບ

- ອົງການອະນາໄມໂລກລາຍງານວ່າ **ເຊື້ອພະຍາດຖອກທ້ອງ,ໂລກອະຫິວາ ເປັນເຊື້ອພະຍາດທີ່ນອນຢູ່ໃນອັນດັບສອງຂອງໂລກ** ເຊິ່ງມັນໄດ້ທໍາລາຍສຸຂະພາບ ແລະ ເສດຖະກິດໃຫ້ສູນເສຍເຖິງ72.8 **ລ້ານໂດລາ ໃນແຕ່ລະປີ.**
- <u>**ການປັບປຸງລະບົບສຸຂະພິບານ (ວິດຖ່າຍ, ນໍ້າສະອາດ) ສຸຂາອະນາໄມ ແລະ ການບໍາບັດນໍ້າເປື້ອນ**</u> **ແມ່ນເປັນດ່ານທໍາອິດໃນ** ການຕ້ານເຊື້ອພະຍາດທີ່ເກີດຈາກນໍ້າເປື້ອນຕ່າງໆ ເຊັ່ນ: <u>ພະຍາດຖອກທ້ອງ,ອະຫິວາ, ທ້ອງບິດ, ໄຂ້ຫມາກເຫລືອງ,ໂລກຜີວຫນັງເຊື້ອແມ່ທ້ອງ</u> ເຊິ່ງມັນໄດ້ກະທົບໃສ່ພື້ນຖານເສດຖະກິດແຕ່ລະປີເຖິງ **193 ລ້ານໂດລາ** (ອົງການນໍ້າໂລກ, ທະນາຄານໂລກ).

15

## ການບໍາບັດນໍ້າເປື້ອນ

- ລະບົບບໍາບັດນໍ້າເປື້ອນ ມີລະບົບກັບທີ່ (ວິດແຫ້ງ, ວິດປຽກ, ຂຸມວິດຊືມ), ລະບົບບໍາບັດນໍ້າເປື້ອນແບບບໍ່ລວມສູນ ຫລື DEWATS (ເປັນລະບົບຢູ່ລະຫວ່າງກາງຂອງລະບົບກັບທີ່ ແລະ ລະບົບລວມສູນ), ລະບົບບໍາບັດນໍ້າເປື້ອນແບບລວມສູນ (Centralized waste water system)
  - ➢ ລະບົບບໍາບັດນໍ້າເປື້ອນແບບລວມສູນ ປະກອບມີ ລະບົບປະເພນີນິຍົມ (conventional sewerage) ຊຶ່ງຮັບໄດ້ທັງນໍ້າຂີ້ສີກ ແລະ ນໍ້າໂສໂຄກ, ລະບົບນໍ້າເປື້ອນທໍ່ນ້ອຍ (small-bore sewers) ຊຶ່ງນໍາເອົານໍ້າເປື້ອນທີ່ຜ່ານການບໍາບັດແລ້ວໄປບໍາບັດຕໍ່ໃນຂັ້ນທີສອງ.

16

# ໄລຍະຫ່າງທີ່ຕ້ອງການ ສໍາລັບຂຸມວິດຊຶມ ແລະ ທໍ່ຊຶມ

| ໄລຍະຫ່າງ ແຕ່ ... | ຂຸມວິດຊຶມ (ແມັດ) | ທໍ່ຊຶມ (ແມັດ) |
|---|---|---|
| ອາຄານ | 1.5 | 3 |
| ຂອບເຂດຂອງຊັບສິນ | 1.5 | 1.5 |
| ນໍ້າສ້າງ | 30 | 30 |
| ຫ້ວຍນໍ້າ | * 7.5 | * 30 |
| ດິນຂຸດ ຫລື ດິນຖົມ | * 7.5 | * 30 |
| ໜອງນໍ້າ | 3 | 7.5 |
| ທໍ່ນໍ້າປະປາ | 3 | 3 |
| ທາງຍ່າງ | 1.5 | 1.5 |
| ຕົ້ນໄມ້ໃຫຍ່ | 3 | 3 |

* ໄລຍະຫ່າງເຫລົ່ານີ້ ຄວນເພີ່ມຂຶ້ນເປັນສອງເທົ່າຕົວ ໃນເມື່ອການຕິດຕັ້ງ ທາງຍູ່ບົນ ສັນປັນນໍ້າຂອງການສະໜອງນໍ້າ

17

# ຂຸມວິດຊຶມມາດຕະຖານ




| [illegible] | [illegible] (m³) | | [illegible] | A | B | C | D | E | F | e (Cm) | IB | IF |
|---|---|---|---|---|---|---|---|---|---|---|---|---|
| 4 | 0.70 | 0.60 | 0.60 | 1.00 | 1.00 | 0.70 | 0.60 | 0.60 | 2.50 | 6 | ø6@15 | ø6@15 |
| 8 | 1.20 | 0.96 | 0.96 | 1.00 | 1.20 | 1.00 | 0.80 | 0.80 | 3.20 | 8 | ø6@13 | ø6@15 |
| 12 | 2.34 | 1.30 | 1.35 | 1.20 | 1.50 | 1.30 | 1.00 | 0.90 | 3.30 | 8 | ø6@10 | ø6@15 |
| 15 | 3.37 | 2.81 | 1.50 | 1.30 | 1.50 | 1.60 | 1.20 | 1.00 | 4.30 | 8 | ø6@10 | ø6@13 |
| 20 | 5.40 | 4.05 | 2.15 | 1.30 | 1.80 | 2.00 | 1.50 | 1.20 | 5.30 | 8 | ø6@12 | ø6@12 |
| 20 30 | 10.00 | 8.00 | 3.00 | 2.00 | 2.00 | 2.50 | 2.00 | 1.50 | 6.50 | 8 | ø6@10 | ø8@12 |
| >50 | 12.00 | 10.00 | 4.00 | 2.00 | 2.00 | 3.00 | 2.50 | 2.00 | 8.10 | 8 | ø6@10 | ø8@12 |

18

## ບົດຮຽນຂອງຕ່າງປະເທດ

- **ລະບົບນໍ້າເປື້ອນພື້ນຖານ** ໄດ້ຖືກນໍາໃຊ້ ເພື່ອເກັບນໍ້າເປື້ອນ ຢູ່ Mesopotamia ໂດຍໃຊ້ທໍ່ທາງຕັ້ງ (vertical shaft) ເພື່ອລໍາລຽງສິ່ງຂັບຖ່າຍຂອງມະນຸດໄປສູ່ໜອງພັກນໍ້າເປື້ອນ (Cesspool). ລະບົບທີ່ຄ້າຍຄືກັນນີ້ **ໄດ້ນໍ້າໃຊ້ຢູ່ເກາະກຣີດບູຮານ ແລະ ຮ່ອມພູ Indus ຫລື ອິນເດຍໃນປັດຈຸບັນ.**
- **ໃນສະໄໝກາງ ລະບົບນໍ້າເປື້ອນທີ່ສ້າງຂຶ້ນໂດຍຄົນໂຣມັນ** ໄດ້ຖືກເລີກໃຊ້ ແລະ ສິ່ງເສດເຫລືອຖືກເກັບໄປສູ່ໜອງພັກສິ່ງໂສໂຄກ ຊຶ່ງຫລັງຈາກນັ້ນຈຶ່ງຕັກອອກຢ່າງເປັນຮອບວຽນໄປ ໂດຍກໍາມະກອນແລ້ວນໍາໄປຂາຍໃຫ້ຊາວກະສິກອນ ຢູ່ນອກເມືອງ.

19

## ບົດຮຽນຂອງຕ່າງປະເທດ (ຕໍ່)

- **ລະບົບນໍ້າເປື້ອນທັນສະໄໝ** ໄດ້ສ້າງຂຶ້ນໃນກາງສະຕະວັດທີ 19 ເພື່ອຕອບຮັບສະພາບອະນາໄມທີ່ນັບມື້ນັບຮ້າຍແຮງຂຶ້ນ ຊຶ່ງມີຜົນມາຈາກການທັນເປັນອຸດສາຫະກໍາ ແລະ ການກາຍເປັນຕົວເມືອງທັນສະໄໝ. ເນື່ອງຈາກການສະໜອງນໍ້າປະປາທີ່ແປດເປື້ອນ, **ການລະບາດຂອງພະຍາດອະຫິວາ ໃນປີ 1832, 1849 ແລະ 1855 ຢູ່ລອນດອນ ເຮັດໃຫ້ມີຜູ້ເສຍຊີວິດຫລາຍໝື່ນຄົນ.** ອັນນີ້ ໂດຍສົມທົບກັບຄວາມເນົ່າເໝັນຂອງແມ່ນໍ້າ Thames ບົດລາຍງານຂອງກໍາມາທິການນໍ້າເປື້ອນ ໄດ້ນໍາໄປສູ່ **ການກໍ່ສ້າງລະບົບນໍ້າເປື້ອນໃຕ້ດິນຂຶ້ນເປັນເທື່ອທໍາອິດ ເພື່ອລໍາລຽງເອົາສິ່ງໂສໂຄກອອກຈາກຕົວເມືອງ.**

20

## ຂະບວນການບຳບັດ

- **ບຳບັດກ່ອນ** (ເອົາຫີນແຮ່, ໄຂມັນອອກ; ດຸ່ນດ່ຽງການໄຫລ)
- **ບຳບັດຂັ້ນໜຶ່ງ**
- **ບຳບັດຂັ້ນສອງ** (Activated sludge, Aerobic granular sludge, Surface-aerated basin, Filter beds or oxidizing beds, Constructed wetlands, Soil bio-technology, Biological aerated filters, Rotaring biological contactors, Membrane bio-reactor, Secondary sedimentation)

21

## ຂະບວນການບຳບັດ (ຕໍ່)

- **ບຳບັດຂັ້ນສາມ** (ກັ່ນຕອງ, ໜອງບຳບັດ, ເອົາສານອາຫານອອກ (ໄນໂຕຣເຈນ, ຟົດສະຟໍຣັດ)
- **ຂ້າເຊື້ອ** (ໃຊ້ສານ chlorine)
- **ຄວບຄຸມກິ່ນ**
- **ບຳບັດ ແລະ ກຳຈັດຂີ້ຕົມແຫລວ** (ການລະລາຍທີ່ບໍ່ໃຊ້ອາກາດ, ການລະລາຍທີ່ໃຊ້ອາກາດ, ການບົ່ມ, ການຈູດ)
- **ກຳຈັດສຸດທ້າຍ**

22

## ທາງເລືອກ ສຳລັບການບຳບັດນ້ຳເປື້ອນ

- ຂຶ້ນກັບລະດັບການຂະຫຍາຍຕົວທາງດ້ານເສດຖະກິດ ແລະ ເຕັກໂນໂລຊີທີ່ມີ
- ພັກ ແລະ ລັດຖະບານ ຊຸກຍູ້ການນຳໃຊ້ລະບົບບຳບັດກັບທີ່ (ວິດປຽກ, ຂຸມວິດຊຶມມາດຕະຖານ); **ລະບົບບຳບັດແບບບໍ່ລວມສູນ (DEWATS) ສຳລັບຊຸມຊົນ, ໂຮງຮຽນ, ໂຮງໝໍ, ບາງໂຮງງານ;** ລະບົບບຳບັດແບບລວມສູນ ຢູ່ຕົວເມືອງທີ່ມີເງື່ອນໄຂ
- ລະບົບDEWATS ເປັນທາງເລືອກທີ່ດີ ສຳລັບຂົງເຂດທີ່ມີລະດັບການຂະຫຍາຍຕົວຂອງເສດຖະກິດຕ່ຳ, ທີ່ດິນຈຳກັດ. ລະບົບນີ້ນອນຢູ່ລະຫວ່າງກາງຂອງລະບົບບຳບັດກັບທີ່ ແລະ ລະບົບບຳບັດແບບລວມສູນ, ສາມາດປະຢັດງົບປະມານ, ພະລັງງານ (ໄຟຟ້າ) ແລະ ຍັງສ້າງພະລັງງານທົດແທນໄດ້ອີກ(ແກັສຊີວະພາບໄວ້ຫຸງຕົ້ມ) ເປັນລະບົບທີ່ນຳໃຊ້ຫລາຍຢູ່ບັນດາປະເທດແຖບເອີຣົບ, ອາຟຣິກາ ແລະ ອາຊີ.

23

## ປະສິດທິຜົນຂອງວິທີການບຳບັດນ້ຳເປື້ອນແບບຕ່າງໆ

| ປະເພດຂອງການບຳບັດ | ເປີເຊັນຂອງການບຳບັດໄດ້ | | |
|---|---|---|---|
| | ທາດແຂງແຂວນລອຍ | BOD5 | Coliforms |
| ຂຸມວິດຊຶມ | ສູງ | 40-50 | 20-30 |
| ໜອງດຸ່ນດ່ຽງ | ສູງຫລາຍ | 80-98 | 75-99.9999 |
| ໜອງເຕີມອາກາດ | ສູງ | 90-95 | 92-97 |
| ຮ່ອງເຕີມອາກາດ | ສູງຫລາຍ | 95-98 | 98-99.99 |
| ກະຕຸ້ນຂີ້ຕົມ | ສູງ | 85-93 | 90-95 |
| ຕົວຕອງນ້ຳຍ້ອຍ | ສູງ | 80-90 | 90-92 |
| ຈານປິ່ນ | ສູງ | 85-95 | 90-97 |
| DEWATS | ສູງ | >90 | 40-60 |

24

# DEWATS ນອນຢູ່ລະຫວ່າງກາງ

DEWATS ນອນຢູ່ລະຫວ່າງກາງລະບົບສຸຂາພິບານກັບທີ່ ແລະ ລະບົບນ້ຳເປື້ອນແບບລວມສູນ




- ✓ ລະບົບລວມສູນໃຊ້ເວລາຈັດຕັ້ງປະຕິບັດ 10-30 ປີ, DEWATS ສາມາດທົດແທນໄລຍະເວລາດັ່ງກ່າວ.
- ✓ DEWATS ສາມາດປະກອບເຂົ້າກັບລະບົບລວມສູນ ສະນັ້ນວິທີການແກ້ໄຂບັນຫາທາງດ້ານສຸຂາພິບານທີ່ດີທີ່ສຸດ ແມ່ນເຮັດຕາມເທື່ອລະຂັ້ນຕອນ.
- ✓ DEWATS ສາມາດຫຼຸດຜ່ອນມົນລະພິດໃນນ້ຳເປື້ອນ ກ່ອນປ່ອຍສູ່ລະບົບລວມສູນ
- ✓ ລະບົບລວມສູນອາດກວມເອົາພື້ນທີ່ຕົວເມືອງບໍ່ໄດ້ທັງໝົດ100%, ສ່ວນທີ່ເຫຼືອແມ່ນສາມາດນຳໃຊ້ DEWATS.

25

# ນ້ຳເປື້ອນທີ່ຜ່ານການບຳບັດແບບ DEWATS ທີ່ເຂື່ອນໄຟຟ້າເທີນຫີນບູນ



ໂຄງສ້າງການບຳບັດນ້ຳເປື້ອນແບບຊຸມຊົນ DEWATS

26

## ການສ້າງຄວາມເຂັ້ມແຂງທາງດ້ານວິຊາການ ແມ່ນສິ່ງຈຳເປັນສຳລັບການດຳເນີນງານລະບົບບຳບັດນ້ຳເປື້ອນແບບ DEWATS

- ເພື່ອເຮັດໃຫ້ການຈັດຕັ້ງທ້ອງຖິ່ນຮັບຮູ້ແລະເຂົ້າໃຈແຈ້ງກ່ຽວກັບຄຸນລັກສະນະຂອງນ້ຳເປື້ອນ ແລະ ຂະບວນການບຳບັດນ້ຳເປື້ອນ, ທາງກົມເຄຫາ ແລະ ຜັງເມືອງ ດ້ວຍການຮ່ວມມືຂອງອົງການບໍດາ ປະເທດເຢຍລະມັນ ຈຶ່ງໄດ້ຈັດການຝຶກອົບຮົມແລກປ່ຽນຄວາມຮູ້ແລະປະສົບການກ່ຽວກັບການບຳບັດນ້ຳເປື້ອນແບບ DEWATS ໃຫ້ແກ່ພະນັກງານການນຳ ແລະ ວິຊາການໃນການຈັດຕັ້ງທ້ອງຖິ່ນທົ່ວປະເທດ ເຊິ່ງເປົ້າຫມາຍຄວາມສຳຄັນ ແລະ ຜົນຂອງການຈັດຕັ້ງປະຕິບັດແມ່ນຈະໄດ້ນຳສະເຫນີໃນຕໍ່ໄປນີ້:

27

## ຄວາມຫມາຍສຳຄັນຂອງການຝຶກອົບຮົມການດຳເນີນງານດ້ານການບຳບັດນ້ຳເປື້ອນແບບ DEWATS

- ອີງຕາມແຜນການພັດທະນາເສີມສ້າງຄວາມຮູ້ຄວາມສາມາດທາງດ້ານວິຊາການໃຫ້ແກ່ແຕ່ລະຂະແໜງການທ້ອງຖິ່ນໃນຂອບເຂດທົ່ວປະເທດ.
- ອີງຕາມແຜນວຽກການຮ່ວມມື ລະຫວ່າງ ກົມເຄຫາ ແລະ ຜັງເມືອງ ກັບອົງການເພື່ອການຄົ້ນຄ້ວາ ແລະ ພັດທະນາສາກົນເບຣເມັນ (BORDA) ໃນການສະໜັບສະໜູນສ້າງຄວາມເຂັ້ມແຂງທາງດ້ານວິຊາການກ່ຽວກັບການພັດທະນາລະບົບບຳບັດນ້ຳເປື້ອນແບບບໍ່ລວມສູນ (DEWATS)ໃຫ້ແກ່ພາກສ່ວນສູນກາງ ແລະ ທ້ອງຖິ່ນໃນຂອບເຂດທົ່ວປະເທດ ຕັ້ງແຕ່ວັນທີ 01/02/2013 ຈົນຮອດວັນທີ 31/01/2015.
- ອີງຕາມຄວາມຮຽກຮ້ອງຕ້ອງການໃນການບຳບັດນ້ຳເປື້ອນໃຫ້ຖືກວິທີ, ເຫມາະສົມ, ປະຢັດ ແລະ ຍືນຍົງ ໃນທົ່ວປະເທດ.

28

## ເນື້ອໃນແລະຈຸດປະສົງຂອງການຝຶກອົບຮົມການດຳເນີນງານດ້ານການບຳບັດນ້ຳເປື້ອນແບບ DEWATS

ເນື້ອໃນ:

- ເພື່ອຖ່າຍທອດ ແລະ ແລກປ່ຽນບົດຮຽນ, ປະສົບການທາງດ້ານເຕັກນິກການບຳບັດນ້ຳເປື້ອນໃຫ້ແກ່ພະນັກງານໃນຂະແໜງການທີ່ກ່ຽວຂ້ອງທົ່ວປະເທດ.

ຈຸດປະສົງ:

- ເພື່ອໃຫ້ຄວາມຮູ້ທົ່ວໄປກ່ຽວກັບເຕັກນິກ ແລະ ປະສົບການໃນການຄຸ້ມຄອງນ້ຳເປື້ອນໃນຂອບເຂດທົ່ວປະເທດ
- ລົງເລິກການແນະນຳບົດຮຽນທາງດ້ານເຕັກນິກກ່ຽວກັບການບຳບັດນ້ຳເປື້ອນແບບບໍ່ລວມສູນ (DEWATS), ແບບລວມສູນ ແລະ ແບບກັບທີ່ ໂດຍການສົມທຽບເຕັກນິກເພື່ອການໝູນໃຊ້ເຂົ້າໃສ່ການຄຸ້ມຄອງ ແລະ ຕິດຕາມການບຳບັດນ້ຳເປື້ອນໃນຂົງເຂດທີ່ຮັບຜິດຊອບໃຫ້ໄປຕາມແລວທາງກັບທິດທາງນະໂຍບາຍຂອງລັດຖະບານວາງອອກ.
- ຮຽນຮູ້ເຖິງວິທີການຂັ້ນຕອນ ການບຳບັດນ້ຳເປື້ອນແບບ DEWATS ຢ່າງລະອຽດ ຊຶ່ງຈະເປັນທາງເລືອກອັນໜຶ່ງໃນການຄຸ້ມຄອງການບຳບັດນ້ຳເປື້ອນໃນ ສປປ ລາວ.

29

## ກຳນົດເວລາຂອງການຝຶກອົບຮົມການດຳເນີນງານດ້ານການບຳບັດນ້ຳເປື້ອນແບບ DEWATS

**ແຂວງ ບໍລິຄຳໄຊ**

- ວັນທີ 05/05/2014 ເວລາ 8:00 – 12:00 ໂມງ, ທີ່ຫ້ອງປະຊຸມ ພະແນກ ໂຍທາທິການ ແລະ ຂົນສົ່ງ

**ແຂວງ ຄຳມ່ວນ**

- ວັນທີ 06/05/2014 ເວລາ 8:00 – 12:00 ໂມງ, ທີ່ຫ້ອງປະຊຸມ ພະແນກ ໂຍທາທິການ ແລະ ຂົນສົ່ງ

**ແຂວງ ສະຫວັນນະເຂດ**

- ວັນທີ 07/05/2014 ເວລາ 8:00 – 12:00 ໂມງ, ທີ່ຫ້ອງປະຊຸມ ພະແນກ ໂຍທາທິການ ແລະ ຂົນສົ່ງ

**ແຂວງ ຈຳປາສັກ**

- ວັນທີ 08/05/2014 ເວລາ 8:00 – 12:00 ໂມງ, ທີ່ຫ້ອງປະຊຸມ ພະແນກ ໂຍທາທິການ ແລະ ຂົນສົ່ງ

30

## ກຳນົດເວລາຂອງການຝຶກອົບຮົມການດຳເນີນງານດ້ານການບຳບັດນ້ຳເປື້ອນແບບ DEWATS

**ແຂວງ ອຸດົມໄຊ**

- ວັນທີ 02/06/2014 ເວລາ 8:00 – 12:00 ໂມງ, ທີ່ຫ້ອງປະຊຸມ ພະແນກ ໂຍທາທິການ ແລະ ຂົນສົ່ງ

**ແຂວງ ຫລວງນ້ຳທາ**

- ວັນທີ 04/06/2014 ເວລາ 8:00 – 12:00 ໂມງ, ທີ່ຫ້ອງປະຊຸມ ພະແນກ ໂຍທາທິການ ແລະ ຂົນສົ່ງ

**ແຂວງ ບໍ່ແກ້ວ**

- ວັນທີ 06/06/2014 ເວລາ 8:00 – 12:00 ໂມງ, ທີ່ຫ້ອງປະຊຸມ ພະແນກ ໂຍທາທິການ ແລະ ຂົນສົ່ງ

31

## ກຳນົດເວລາຂອງການຝຶກອົບຮົມການດຳເນີນງານດ້ານການບຳບັດນ້ຳເປື້ອນແບບ DEWATS

**ແຂວງ ຊຽງຂວາງ**

- ວັນທີ 07/07/2014 ເວລາ 8:00 – 12:00 ໂມງ, ທີ່ຫ້ອງປະຊຸມ ພະແນກ ໂຍທາທິການ ແລະ ຂົນສົ່ງ

**ແຂວງ ຫົວພັນ**

- ວັນທີ 09/07/2014 ເວລາ 8:00 – 12:00 ໂມງ, ທີ່ຫ້ອງປະຊຸມ ພະແນກ ໂຍທາທິການ ແລະ ຂົນສົ່ງ

32

## ກໍານົດເວລາຂອງການຝຶກອົບຮົມການດໍາເນີນງານດ້ານການບໍາບັດ ນໍ້າເປື້ອນແບບ DEWATS

**ແຂວງ ສາລະວັນ**

- ວັນທີ 04/08/2014 ເວລາ 8:00 – 12:00 ໂມງ, ທີ່ຫ້ອງປະຊຸມ ພະແນກ ໂຍທາທິການ ແລະ ຂົນສົ່ງ

**ແຂວງ ເຊກອງ**

- ວັນທີ 06/08/2014 ເວລາ 8:00 – 12:00 ໂມງ, ທີ່ຫ້ອງປະຊຸມ ພະແນກ ໂຍທາທິການ ແລະ ຂົນສົ່ງ

**ແຂວງ ອັດຕະປື**

- ວັນທີ 08/08/2014 ເວລາ 8:00 – 12:00 ໂມງ, ທີ່ຫ້ອງປະຊຸມ ພະແນກ ໂຍທາທິການ ແລະ ຂົນສົ່ງ

33

## ກໍານົດເວລາຂອງການຝຶກອົບຮົມການດໍາເນີນງານດ້ານການບໍາບັດ ນໍ້າເປື້ອນແບບ DEWATS

**ແຂວງ ວຽງຈັນ**

- ວັນທີ 08/09/2014 ເວລາ 8:00 – 12:00 ໂມງ, ທີ່ຫ້ອງປະຊຸມ ພະແນກ ໂຍທາທິການ ແລະ ຂົນສົ່ງ

**ແຂວງ ຫລວງພຣະບາງ**

- ວັນທີ 10/09/2014 ເວລາ 8:00 – 12:00 ໂມງ, ທີ່ຫ້ອງປະຊຸມ ພະແນກ ໂຍທາທິການ ແລະ ຂົນສົ່ງ

**ແຂວງ ໄຊຍະບຸຣີ**

- ວັນທີ 12/09/2014 ເວລາ 8:00 – 12:00 ໂມງ, ທີ່ຫ້ອງປະຊຸມ ພະແນກ ໂຍທາທິການ ແລະ ຂົນສົ່ງ

34

ຜົນໄດ້ຮັບຈາກກິດຈະກຳການຝຶກອົບຮົມວິຊາການກ່ຽວກັບການບຳບັດ
ນ້ຳເປື້ອນແບບ DEWATS ໃຫ້ແກ່ການຈັດຕັ້ງທ້ອງຖິ່ນ
ໃນທົ່ວປະເທດ



DEWATS ນອນຢູ່ລະຫວ່າງກາງ

BORDA

35

ຂອບໃຈ !

36

# ຂໍ້ຕົກລົງຂອງລັດຖະມົນຕີວ່າການ ວ່າດ້ວຍການຄຸ້ມຄອງສະໜາມກຳຈັດຂີ້ເຫຍື້ອ

ນຳສະເໜີໂດຍ:
ພະແນກພັດທະນາຕົວເມືອງ, ກົມເຄຫາ ແລະ ຜັງເມືອງ, ກະຊວງໂຍທາທິການ ແລະ ຂົນສົ່ງ

## ສັງລວມຫຍໍ້ກ່ຽວກັບຂໍ້ຕົກລົງຂອງລັດຖະມົນຕີ ວ່າດ້ວຍການຄຸ້ມຄອງສະໜາມກຳຈັດຂີ້ເຫຍື້ອ

- ມີ 9 ໝວດ 32 ມາດຕາ
- ໝວດທີ 1 - ຂໍ້ກຳນົດທົ່ວໄປ ມີ 5 ມາດຕາ
- ໝວດທີ 2 - ການຄັດເລືອກທີ່ຕັ້ງຂອງສະໜາມກຳຈັດຂີ້ເຫຍື້ອ ມີ 3 ມາດຕາ
- ໝວດທີ 3 - ການອອກແບບ ກໍ່ສ້າງສະໜາມກຳຈັດຂີ້ເຫຍື້ອ ມີ 2 ມາດຕາ
- ໝວດທີ 4 - ການດຳເນີນງານຢູ່ສະໜາມກຳຈັດຂີ້ເຫຍື້ອ ມີ 3 ມາດຕາ
- ໝວດທີ 5 - ຫລັກການໃນການດຳເນີນງານ ຢູ່ສະໜາມກຳຈັດຂີ້ເຫຍື້ອ ມີ 8 ມາດຕາ
- ໝວດທີ 6 - ການປິດສະໜາມກຳຈັດຂີ້ເຫຍື້ອ ມີ 4 ມາດຕາ
- ໝວດທີ 7 - ສະໜາມກຳຈັດຂີ້ເຫຍື້ອອຸດສາຫະກຳຂອງເອກະຊົນ ມີ 2 ມາດຕາ
- ໝວດທີ 8 - ການກວດກາ ມີ 3 ມາດຕາ
- ໝວດທີ 9 - ບົດບັນຍັດສຸດທ້າຍ ມີ 2 ມາດຕາ

## ໝວດທີ 1 - ຂໍ້ກຳນົດທົ່ວໄປ

**ມາດຕາ 1: ຈຸດປະສົງ**

ຈຸດປະສົງໃນການອອກຂໍ້ຕົກລົງສະບັບນີ້ ແມ່ນເພື່ອຮັບປະກັນ ໃຫ້ອົງການຈັດຕັ້ງ ທີ່ຮັບຜິດຊອບຄຸ້ມຄອງຂີ້ເຫຍື້ອ ຢູ່ບັນດາຕົວເມືອງ, ເທດສະບານ ແລະກຸ່ມບ້ານໃຫຍ່ຕ່າງໆ ໃນທົ່ວປະເທດ ມີການຈັດຕັ້ງຄຸ້ມຄອງການກໍ່ສ້າງ, ການດຳເນີນງານ ແລະ ການປິດສະໜາມກຳຈັດຂີ້ເຫຍື້ອໄດ້ ຢ່າງພຽງພໍ, ພ້ອມທັງຮັບປະກັນການປົກປ້ອງສຸຂະພາບຂອງປະຊາຊົນ ແລະ ປົກປັກຮັກສາສິ່ງແວດລ້ອມ.

**ມາດຕາ 2: ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ ວາງລະບຽບຫຼັກການອັນຈຳເປັນຈຳນວນໜຶ່ງ ເພື່ອນຳໃຊ້ເຂົ້າໃນການວາງແຜນກໍ່ສ້າງ, ຄຸ້ມຄອງ ແລະ ກວດກາສະໜາມກຳຈັດຂີ້ເຫຍື້ອທົ່ວໄປ ຢູ່ໃນຂອບເຂດທົ່ວປະເທດ, ຕົ້ນຕໍ ແມ່ນວາງເງື່ອນໄຂ ແລະ ມາດຕະຖານ ສຳລັບການຄັດເລືອກເອົາທີ່ຕັ້ງ, ການອອກແບບການກໍ່ສ້າງສະໜາມກຳຈັດຂີ້ເຫຍື້ອທີ່ຖືກສຸຂະອະນາໄມ, ການສ້າງແຜນການ ແລະ ວິທີການດຳເນີນງານ ແລະ ການປິດສະ ໜາມກຳຈັດຂີ້ເຫຍື້ອ ດັ່ງກ່າວ.

## ໝວດທີ 1 - ຂໍ້ກຳນົດທົ່ວໄປ (ຕໍ່)

**ມາດຕາ 3: ນິຍາມຄຳສັບ**

- ອົງການຄຸ້ມຄອງສະໜາມກຳຈັດຂີ້ເຫຍື້ອ ແມ່ນອົງການລັດ ທີ່ໄດ້ຮັບການມອບໝາຍໃຫ້ຮັບຜິດຊອບ ແລະ ຊີ້ນຳໃນການເກັບມ້ຽນ ແລະ ກຳຈັດຂີ້ເຫຍື້ອໃຫ້ມີຄວາມຖືກຕ້ອງຕາມລະບຽບທີ່ໄດ້ລະບຸໄວ້ ໃນລະບຽບນີ້. ອົງການຄຸ້ມຄອງປະດ້ວຍອຳນາດການປົກຄອງເມືອງ, ພະແນກ ຍທຂ ແຂວງ, ອົງການພັດທະນາ ແລະ ບໍລິຫານຕົວເມືອງ ແລະ ກຸ່ມບ້ານພັດທະນາ.
- ສະໜາມກຳຈັດຂີ້ເຫຍື້ອເປີດ ແມ່ນສະຖານທີ່ຖິ້ມ ຫຼື ກຳຈັດຂີ້ເຫຍື້ອແບບທຳມະຊາດ ຊຶ່ງບໍ່ມີການຄຸ້ມຄອງ ບໍ່ມີຮົ້ວປ້ອງກັນຄົນ ແລະ ສັດ, ທີ່ຈະເຂົ້າໄປໃນສະໜາມ, ຍັງບໍ່ທັນໄດ້ຮັບປະກັນ ທາງດ້ານສຸຂະອະນາໄມຂອງປະຊາຊົນ ແລະ ອາດມີຜົນກະທົບ ທີ່ບໍ່ດີ ຕໍ່ສິ່ງແວດລ້ອມ.
- ສະໜາມກຳຈັດຂີ້ເຫຍື້ອທີ່ມີການຄວບຄຸມ ແມ່ນສະຖານທີ່ກຳຈັດຂີ້ເຫຍື້ອເປີດ ແຕ່ມີຜູ້ຄຸ້ມຄອງ, ມີຮົ້ວປ້ອງກັນຄົນ, ສັດ ແຕ່ລະໄລຍະອາດຈະມີການກວາດທ້ອນ ແລະ ຝັງຖົມດ້ວຍດິນເພື່ອຮັບປະກັນດ້ານສຸຂະອະນາໄມຂອງປະຊາຊົນ ແລະ ຫຼຸດຜ່ອນຜົນກະທົບຕໍ່ສິ່ງແວດລ້ອມ.
- ສະໜາມກຳຈັດຂີ້ເຫຍື້ອທີ່ຖືກຫຼັກສຸຂະອະນາໄມ ແມ່ນສະຖານທີ່ກຳຈັດຂີ້ເຫຍື້ອ ຊຶ່ງໄດ້ຮັບການວາງແຜນ ແລະ ກໍ່ສ້າງຖືກຕ້ອງຕາມມາດຕະຖານ, ມີການຄຸ້ມຄອງ ມີລະບົບປ້ອງກັນຄົນ, ສັດ ບໍ່ໃຫ້ເຂົ້າໄປໃນສະໜາມກຳຈັດຂີ້ເຫຍື້ອ ດ້ວຍວິທີການຝັງຖົມ ດ້ວຍດິນດີ ເພື່ອຮັບປະກັນດ້ານສຸຂະອະນາໄມຂອງປະຊາຊົນ ແລະ ຫຼຸດຜ່ອນຜົນກະທົບຕໍ່ສິ່ງແວດລ້ອມ.

## ໝວດທີ 1 - ຂໍ້ກຳນົດທົ່ວໄປ (ຕໍ່)

### ມາດຕາ 4: ການກຳນົດໃຫ້ມີສະໜາມກຳຈັດຂີ້ເຫຍື້ອ

ອົງການຈັດຕັ້ງທີ່ຮັບຜິດຊອບຄຸ້ມຄອງຂີ້ເຫຍື້ອ ຢູ່ໃນບັນດາຕົວເມືອງ, ເທດສະບານ ແລະ ກຸ່ມບ້ານໃຫຍ່ຕ່າງໆ ຕ້ອງຈັດໃຫ້ມີສະໜາມກຳຈັດຂີ້ເຫຍື້ອ ສຳລັບຕົວເມືອງ,ເທດສະບານ ແລະ ກຸ່ມບ້ານຂອງຕົນຢ່າງຄັກແນ່; ສະໜາມດັ່ງກ່າວ ຕ້ອງມີທີ່ຕັ້ງທີ່ເໝາະສົມ ແລະ ມີເນື້ອທີ່ໆພຽງພໍເພື່ອຮອງຮັບເອົາປະລິມານຂີ້ເຫຍື້ອຈາກຕົວເມືອງ, ເທດສະບານ ແລະ ກຸ່ມບ້ານຂອງຕົນ. (ຢ່າງໜ້ອຍກໍ່ຕ້ອງໃຫ້ມີສະໜາມກຳຈັດຂີ້ເຫຍື້ອເປີດກ່ອນ).

### ມາດຕາ 5: ການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ

ການວາງແຜນເພື່ອການກໍ່ສ້າງສະໜາມກຳຈັດຂີ້ເຫຍື້ອທີ່ຖືກຫຼັກສຸຂະອະນາໄມ ຂອງຕົວເມືອງ ແລະ ເທດສະບານຕ່າງໆ ຈະຕ້ອງໄດ້ມີການສຶກສາ ແລະ ປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ຢູ່ໃນ ສປປ ລາວ; ພາຍພາຍຫຼັງທີ່ໄດ້ຮັບໃບຢັ້ງຢືນຮັບຮອງດ້ານສິ່ງແວດລ້ອມແລ້ວ ຈຶ່ງອະນຸຍາດໃຫ້ດຳເນີນການກໍ່ສ້າງໄດ້.

## ໝວດທີ 2 - ການຄັດເລືອກທີ່ຕັ້ງຂອງສະໜາມກຳຈັດຂີ້ເຫຍື້ອ

### ມາດຕາ 6: ເງື່ອນໄຂໃນການຄັດເລືອກຂອງສະໜາມກຳຈັດຂີ້ເຫຍື້ອ

ການຄັດເລືອກເອົາທີ່ຕັ້ງສະໜາມກຳຈັດຂີ້ເຫຍື້ອແຫ່ງໃດໜຶ່ງແມ່ນຕ້ອງໃຫ້ຂອບເຂດ ຮັບປະກັນໄດ້ ຕາມເງື່ອນໄຂດັ່ງຕໍ່ໄປນີ້:

- ໃຫ້ຢູ່ຫ່າງຈາກເຂດຕົວເມືອງ ຢ່າງໜ້ອຍ 7 ກິໂລແມັດ ຖ້າແມ່ນເຂດທົ່ງພຽງ ຫລື ເຂດພູດອຍ ແມ່ນ 5 ກິໂລແມັດ (ໃນກໍລະນີຈຳເປັນທີ່ສຸດ ແມ່ນບໍ່ໃຫ້ຫຼຸດ 3 ກິໂລແມັດ).
- ໃຫ້ຢູ່ຫ່າງຈາກເຂດສະໜາມບິນ ຢ່າງໜ້ອຍ 3 ກິໂລແມັດ;
- ໃຫ້ຢູ່ຫ່າງຈາກສະຖານທີ່ປະຫວັດສາດ ຫຼື ບູຮານວັດຖຸຢ່າງໜ້ອຍ 1 ກິໂລແມັດ;
- ໃຫ້ຢູ່ຫ່າງຈາກບ້ານປະຊາຊົນ, ແມ່ນ້ຳ, ລຳເຊ, ຫ້ວຍຮ່ອງ, ຄອງຊົນລະປະທານ, ດູນທາມ, ໜອງ, ອ່າງເກັບນ້ຳ ແລະ ນ້ຳສ້າງ ທີ່ປະຊາຊົນຍັງນຳໃຊ້ຢູ່ ຢ່າງໜ້ອຍ 300 ແມັດ;
- ບໍ່ໃຫ້ຢູ່ເໜືອສາຍນ້ຳ ແລະ ທິວລົມ ( ທຽບໃສ່ບ້ານ ຫຼື ຊຸມຊົນທີ່ຢູ່ໃກ້ຄຽງ);
- ບໍ່ໃຫ້ຢູ່ໃນເຂດທີ່ມີນ້ຳຖ້ວມຂັງໃນລະດູຝົນ;
- ບໍ່ໃຫ້ຢູ່ໂນນທີ່ມີການເຊາະເຈື່ອນງ່າຍ ຫຼື ໂນນທີ່ມີຄວາມຊັນຂອງໜ້າດິນຫລາຍກວາ 30 ສວນຮ້ອຍ.

## ໝວດທີ 2 - ການຄັດເລືອກທີ່ຕັ້ງຂອງສະໜາມກຳຈັດຂີ້ເຫຍື້ອ (ຕໍ່)

**ມາດຕາ 7: ການປ້ອງກັນນ້ຳໃຕ້ດິນ** ດິນທີ່ຢູ່ພື້ນສະໜາມກຳຈັດຂີ້ເຫຍື້ອ ຕ້ອງເປັນດິນທີ່ນ້ຳຊຶມບໍ່ໄດ້ງ່າຍ ແລະ ຈຸດຕ່ຳສຸດຂອງພື້ນສະໜາມ ຫຼື ຂຸມກຳຈັດຂີ້ເຫຍື້ອ ຕ້ອງໃຫ້ສູງກວ່າ ລະດັບນ້ຳໃຕ້ດິນໃນລະດູຝົນ ຢ່າງໜ້ອຍ 2 ແມັດຂຶ້ນໄປ. ໃນກໍລະນີຈຳເປັນຈຸດຕ່ຳສຸດຂອງພື້ນຂຸມກຳຈັດຂີ້ເຫຍື້ອ ອາດຈະຢູ່ສູງກວ່າລະດັບນ້ຳໃຕ້ດິນບໍ່ເຖິງ 2 ແມັດ ກໍໄດ້ແຕ່ການອອກແບບ ແລະ ກໍ່ສ້າງຕ້ອງໄດ້ປະຕິບັດໃຫ້ຖືກຕ້ອງຕາມມາດຕະຖານທີ່ໄດ້ກຳນົດໄວ້ໃນມາດຕາ 10 ຂໍ້ທີ 8 ຂອງຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ.

**ມາດຕາ 8: ການຮັບຮອງເອົາທີ່ຕັ້ງຂອງສະໜາມກຳຈັດຂີ້ເຫຍື້ອ**

- ທີ່ຕັ້ງຂອງສະໜາມກຳຈັດຂີ້ເຫຍື້ອ ຢູ່ບັນດາຕົວເມືອງ ແລະ ເທດສະບານຕ່າງໆ ແມ່ນຕ້ອງໄດ້ຜ່ານການຮັບຮອງເອົາ ຢ່າງເປັນທາງການຈາກອົງການປົກຄອງແຂວງ ຫລື ນະຄອນຫຼວງ ທີ່ກ່ຽວຂ້ອງ, ໂດຍແມ່ນພະແນກໂຍທາທິການ ແລະ ຂົນສົ່ງ ເປັນຜູ້ຄົ້ນຄວ້າ ແລະ ນຳສະເໜີ, ບົນພື້ນຖານ ໄດ້ມີຄວາມເຫັນດີເປັນເອກະພາບຈາກພະແນກສາທາລະນະສຸກ ແລະ ຫ້ອງການວິທະຍາສາດເຕັກໂນໂລຊີ ແລະ ສິ່ງແວດລ້ອມ.
- ທີ່ຕັ້ງສະໜາມກຳຈັດຂີ້ເຫຍື້ອ ຂອງກຸ່ມບ້ານໃຫຍ່ ແມ່ນໄດ້ຜ່ານການຮັບຮອງເອົາຈາກອົງການປົກຄອງເມືອງ ທີ່ກ່ຽວຂ້ອງເປັນຜູ້ຄົ້ນຄວ້າ ແລະ ນຳສະເໜີ, ບົນພື້ນຖານໄດ້ມີຄວາມເຫັນດີເປັນເອກະພາບຈາກຂະແໜງການ ທີ່ກ່ຽວຂ້ອງແລ້ວ.

## ໝວດທີ 3 - ການອອກແບບ ກໍ່ສ້າງ ສະໜາມກຳຈັດຂີ້ເຫຍື້ອ

**ມາດຕາ 9: ການອອກແບບກໍ່ສ້າງສະໜາມກຳຈັດຂີ້ເຫຍື້ອ**

- ສະໜາມກຳຈັດຂີ້ເຫຍື້ອ ຕ້ອງຖືກອອກແບບໂດຍບໍລິສັດ ສຳຫຼວດ-ອອກແບບທີ່ໄດ້ຮັບອະນຸຍາດ ຖືກຕ້ອງຕາມກົດໝາຍ ແລະ ຕ້ອງປະຕິບັດຕາມມາດຕະຖານທີ່ໄດ້ກຳນົດໄວ້ໃນມາດຕາ 10 ຂອງຂໍ້ຕົກລົງສະບັບນີ້ ຢ່າງເຂັ້ມງວດ ເພື່ອຮັບປະກັນບໍ່ໃຫ້ມີຜົນກະທົບທີ່ເປັນອັນຕະລາຍຕໍ່ສິ່ງມີຊີວິດ ແລະ ສິ່ງແວດລ້ອມທົ່ວໄປ.
- ການກໍ່ສ້າງສະໜາມກຳຈັດຂີ້ເຫຍື້ອ ສຳລັບຕົວເມືອງ ແລະ ເທດສະບານຕ່າງໆ ຕ້ອງສ້າງໃຫ້ເປັນສະໜາມກຳຈັດຂີ້ເຫຍື້ອທີ່ຖືກຫຼັກສຸຂະອະນາໄມ. ໃນກໍລະນີທີ່ມີງົບປະມານການກໍ່ສ້າງບໍ່ທັນພຽງພໍ ກໍອາດຈະເຮັດເປັນສະ ໜາມກຳຈັດຂີ້ເຫຍື້ອເປີດ ຫຼື ສະໜາມກຳຈັດຂີ້ເຫຍື້ອ ທີ່ມີການຄວບຄຸມ ໃນລະດັບໃດໜຶ່ງກ່ອນ ແຕ່ໃຫ້ມີການອອກແບບ ຫຼື ວາງແຜນໄວ້ລ່ວງໜ້າ ເພື່ອໃຫ້ສາມາດປັບປຸງ ຫຼື ຍົກລະດັບໃຫ້ກາຍເປັນສະໜາມກຳຈັດຂີ້ເຫຍື້ອທີ່ຖືກຫຼັກສຸຂະອະນາໄມ ໄດ້ໃນອະນາຄົດ.

## ໝວດທີ 3 - ການອອກແບບ ກໍ່ສ້າງ ສະໜາມ ກຳຈັດຂີ້ເຫຍື້ອ (ຕໍ່)

ມາດຕາ 10: ມາດຕະຖານໃນການອອກແບບສະໜາມກຳຈັດຂີ້ເຫຍື້ອທີ່ຖືກຫລັກສຸຂາອະນາໄມ ໃນການອອກແບບສະໜາມກຳຈັດຂີ້ເຫຍື້ອທີ່ຖືກຫຼັກສຸຂາອະນາໄມ, ຢ່າງໜ້ອຍຕ້ອງຮັບປະກັນໃຫ້ໄດ້ຕາມມາດຕະຖານທົ່ວໄປ ດັ່ງລຸ່ມນີ້:

- ຂຸມກຳຈັດຂີ້ເຫຍື້ອ ຕ້ອງໃຫ້ມີຂະໜາດທີ່ເໝາະສົມ ສາມາດຮັບຮອງເອົາປະລິມານຂີ້ເຫຍື້ອ ໄດ້ຢ່າງພຽງພໍ ແລະສາມາດນຳໃຊ້ໄດ້ຫຼາຍກວ່າ 10 ປີ ຂຶ້ນໄປ.
- ຂຸມຂີ້ເຫຍື້ອ ຕ້ອງໃຫ້ຢູ່ຫ່າງຈາກເຂດສະຫງວນຂອງທາງຫຼວງຢ່າງໜ້ອຍ 200 ແມັດ (ໃນກໍລະນີຈຳເປັນທີ່ສຸດແມ່ນບໍ່ໃຫ້ 50 ແມັດ ), ຕ້ອງມີຄັນຄູດິນອ້ອມຮອບ ແລະ ມີການປູກຕົ້ນໄມ້ໃຫ້ເປັນແຖວອ້ອມສະໜາມໃຫ້ສວຍສົດງົດງາມ);
- ຮັບປະກັນໃຫ້ມີປະລິມານດິນຖົມຢ່າງພຽງພໍ ເພື່ອທີ່ຈະນຳໃຊ້ຖົມຂີ້ເຫຍື້ອຕະຫຼອດອາຍຸການນຳໃຊ້ສະໜາມດັ່ງກ່າວ(ດິນທີ່ຈະນຳໃຊ້ຖົມຂີ້ເຫຍື້ອອາດຈະມີການສະສົມໄວ້ໃນສະໜາມ ໃນເວລາກໍ່ສ້າງ ຫຼື ຂົນມາຈາກບ່ອນອື່ນກໍໄດ້);

## ມາດຕາ 10: ມາດຕະຖານໃນການອອກແບບສະໜາມກຳຈັດຂີ້ເຫຍື້ອທີ່ຖືກຫລັກສຸຂາອະນາໄມ (ຕໍ່)

- ໃນກໍລະນີທີ່ມີຫ້ວຍ, ຮ່ອງ ຫຼື ຮ່ອງນ້ຳຊົ່ວຄາວ ຜ່ານບໍລິເວນສະໜາມກຳຈັດຂີ້ເຫຍື້ອ ຕ້ອງໄດ້ປ່ຽນແປງແລວນ້ຳຂອງຫ້ວຍ ຫຼື ຮ່ອງດັ່ງກ່າວ ອອກໄປໃຫ້ໄກຈາກຂຸມກຳຈັດຂີ້ເຫຍື້ອ;
- ມີການປັບລະດັບໜ້າດິນບໍລິເວນສະໜາມກຳຈັດຂີ້ເຫຍື້ອ ເພື່ອປ່ຽນທິດທາງໃນການໄຫຼ ຂອງນ້ຳຝົນ ໃຫ້ອອກໄປຈາກຂຸມກຳຈັດຂີ້ເຫຍື້ອ ແລະ ເພື່ອປ້ອງກັນບໍ່ໃຫ້ມີນ້ຳຖ້ວມຂັງຢູ່ໃນສະໜາມ;
- ມີລະບົບລະບາຍນ້ຳ ແລະ ໜອງບຳບັດນ້ຳເປື້ອນເພື່ອໃຫ້ນ້ຳຝົນ ແລະ ນ້ຳເປື້ອນໄຫຼອອກ ຈາກຂຸມກຳຈັດຂີ້ເຫຍື້ອໄດ້ຜ່ານຂະບວນການບຳບັດໂດຍອາໄສຂະບວນການທາງດ້ານຊີວະວິທະຍາ ກ່ອນຈະປ່ອຍໄປສູ່ຫ້ວຍຮ່ອງ ຫຼື ໜອງນ້ຳທົ່ວໄປ (ສຳລັບ ສະໜາມກຳຈັດຂີ້ເຫຍື້ອຂອງຕົວເມືອງໃຫຍ່ ຫຼື ເທດສະບານ);
- ພື້ນດິນບໍລິເວນຂຸມກຳຈັດຂີ້ເຫຍື້ອ ຕ້ອງໄດ້ຢຽບແໜ້ນ ແລະ ປັບລະດັບໃຫ້ມີຄວາມເນີນທີ່ເໝາະສົມ ເພື່ອເຮັດໃຫ້ນ້ຳເປື້ອນທີ່ເກີດຈາກການເປື່ອຍຂອງຂີ້ເຫຍື້ອ ສາມາດໄຫຼໄປສູ່ໜອງບຳບັດນ້ຳເປື້ອນໄດ້;

## ມາດຕາ 10: ມາດຕະຖານໃນການອອກແບບສະໜາມກຳຈັດຂີ້ເຫຍື້ອທີ່ຖືກຫລັກສຸຂາອະນາໄມ (ຕໍ່)

- ໃນກໍລະນີທີ່ລະດັບນໍ້າໃຕ້ດິນຢູ່ເລິກຈາກຈຸດຕໍ່າສຸດຂອງພື້ນຂຸມກຳຈັດຂີ້ເຫຍື້ອບໍ່ເຖິງ 2 ແມັດ ພື້ນຂຸມດັ່ງກ່າວ ຕ້ອງຖືກປູດ້ວຍດິນໜຽວທີ່ກັນຊຶມໄດ້ ຄວາມໜາຢ່າງໜ້ອຍ 30 ຊັງຕີແມັດຂື້ນໄປ ຫຼື ປູດ້ວຍວັດສະດຸອື່ນໆ ທີ່ສາມາດກັນຊຶມໄດ້;
- ມີລະບົບລະບາຍອາຍແກັດ ທີ່ເກີດມາຈາກການເປື່ອຍຂອງຂີ້ເຫຍື້ອ ທີ່ຖືກຝັງໄປແລ້ວນັ້ນ, ຍົກເວັ້ນແຕ່ວິສາວະກອນຫາກລະບຸໄວ້ວ່າບໍ່ມີອາຍແກັດພຽງພໍທີ່ຈະເປັນສາຍເຫດໃຫ້ແກ່ການລະເບີດໄດ້.
- ມີຮົ້ວອ້ອມຮອບສະໜາມທີ່ດີ ແລະ ມີປະຕູປິດ-ເປີດຢູ່ທາງເຂົ້າ ເພື່ອປ້ອງກັນບໍ່ໃຫ້ບຸກຄົນ ແລະ ລົດຂົນຂີ້ເຫຍື້ອທີ່ບໍ່ໄດ້ຮັບອະນຸຍາດ ລວມທັງສັດລ້ຽງຕ່າງໆ ເຂົ້າໄປໃນສະໜາມໄດ້;
- ມີເສັ້ນທາງເຂົ້າສູ່ສະໜາມກຳຈັດຂີ້ເຫຍື້ອ ແລະ ທາງພາຍໃນທີ່ດີ ສາມາດນຳໃຊ້ໄດ້ໃນທຸກລະດູການ ເພື່ອຮັບປະກັນໃຫ້ລົດຂົນສົ່ງຂີ້ເຫຍື້ອເຂົ້າໄປຫາເຂດສະໜາມກຳຈັດຂີ້ເຫຍື້ອໄດ້ຢ່າງສະດວກ;
- ມີອາຄານຫ້ອງການທີ່ສາມາດນຳໃຊ້ໄດ້ໃນທຸກລະດູການ ພ້ອມທັງມີຫ້ອງນໍ້າ ແລະ ອຸປະກອນອຳນວຍຄວາມດວກ ໃນການລ້າງສວ່າຍຕ່າງໆ;

## ໝວດທີ 4 - ການດຳເນີນງານຢູ່ສະໜາມກຳຈັດຂີ້ເຫຍື້ອ

### ມາດຕາ 11: ແຜນດຳເນີນງານ ຢູ່ສະໜາມກຳຈັດຂີ້ເຫຍື້ອ

- ກ່ອນຈະເລີ່ມຕົ້ນດຳເນີນວຽກງານຢູ່ສະໜາມກຳຈັດຂີ້ເຫຍື້ອທີ່ຖືກຫຼັກສຸຂາອະນາໄມຂອງບັນດາຕົວເມືອງ ແລະ ເທດສະບານຕ່າງໆ ອົງການທີ່ຄຸ້ມຄອງສະໜາມຕ້ອງໄດ້ສ້າງແຜນດຳເນີນງານຢູ່ສະໜາມຢ່າງລະອຽດແລ້ວນຳສະເໜີຕໍ່ ພະແນກ ຍທຂ ທີ່ກ່ຽວຂ້ອງເພື່ອພິຈາລະນາຮັບເອົາຢ່າງເປັນທາງການ.
- ພາຍຫຼັງທີ່ແຜນດຳເນີນງານຢູ່ສະໜາມໄດ້ຖືກຮັບຮອງເອົາຢ່າງເປັນທາງການແລ້ວ ການຈັດຕັ້ງປະຕິບັດວຽກງານຕ່າງໆກໍ່ຄືການປະຕິບັດງານຢູ່ສະໜາມກຳຈັດຂີ້ເຫຍື້ອນັ້ນ ແມ່ນຕ້ອງໃຫ້ສອດຄ່ອງກັບແຜນດຳເນີນງານດັ່ງກ່າວ.
- ໃນແຕ່ລະໄລຍະ ອົງການຄຸ້ມຄອງສະໜາມກຳຈັດຂີ້ເຫຍື້ອ ຕ້ອງໄດ້ມີການປັບປຸງແຜນດຳເນີນງານຢູ່ສະໜາມຄືນໃໝ່ ເພື່ອໃຫ້ສອດຄ່ອງກັບສະພາບຕົວຈິງ.

## ໝວດທີ 4 - ການດຳເນີນງານຢູ່ສະໜາມກຳຈັດຂີ້ເຫຍື້ອ (ຕໍ່)

### ມາດຕາ 12: ແຫລ່ງທຶນສຳລັບການດຳເນີນງານຢູ່ສະໜາມກຳຈັດຂີ້ເຫຍື້ອ

- ອົງການຄຸ້ມຄອງສະໜາມກຳຈັດຂີ້ເຫຍື້ອ ທີ່ຖືກຫັກສຸຂາອະນາໄມແຕ່ລະແຫ່ງ ຈະຕ້ອງຊອກຫາແຫຼ່ງທຶນສຳລັບການດຳເນີນງານຢູ່ສະໜາມ ແລະ ການປິດສະໜາມ ພາຍຫຼັງທີ່ໄດ້ນຳໃຊ້ເຕັມຄວາມສາມາດຂອງມັນແລ້ວ.
- ເພື່ອຮັບປະກັນດ້ານທຶນຮອນ ແລະ ທັງເປັນການຫຼຸດຜ່ອນງົບປະມານຂອງລັດ ແລະ ອົງການທີ່ຄຸ້ມຄອງສະໜາມກຳຈັດຂີ້ເຫຍື້ອ ຈາກຜູ້ທີ່ນຳເອົາຂີ້ເຫຍື້ອມາກຳຈັດໄດ້ ໃນອັດຕາທີ່ສົມເຫດສົມຜົນ.
- ໃນກໍລະນີທີ່ລາຍຮັບທີ່ເກັບໄດ້ຈາກການບໍລິການກຳຈັດຂີ້ເຫຍື້ອນັ້ນ ຍັງບໍ່ພຽງພໍ ກັບຄ່າໃຊ້ຈ່າຍຕົວຈິງ ໃນການດຳເນີນຢູ່ສະໜາມ ແມ່ນໃຫ້ຂຶ້ນແຜນຂໍງົບປະມານຂອງລັດ ຫລື ຊອກຫາແຫຼ່ງທຶນອື່ນມາຊ່ວຍຖົມຊຸມຄ່າໃຊ້ຈ່າຍໃນສ່ວນທີ່ຍັງເຫຼືອ.

## ໝວດທີ 4 - ການດຳເນີນງານຢູ່ສະໜາມກຳຈັດຂີ້ເຫຍື້ອ (ຕໍ່)

### ມາດຕາ 13: ຄ່າບໍລິການກຳຈັດຂີ້ເຫຍື້ອ

- ອົງການຄຸ້ມຄອງສະໜາມກຳຈັດຂີ້ເຫຍື້ອ ຕ້ອງເປັນຜູ້ຄິດໄລ່ຄ່າໃຊ້ຈ່າຍສິ້ນເປືອງຕ່າງໆ ແລະ ກຳນົດອັດຕາຄ່າບໍລິການກຳຈັດຂີ້ເຫຍື້ອ ແຕ່ລະປະເພດ ທີ່ເອົາເຂົ້າໄປກຳຈັດຢູ່ໃນສະໜາມກຳຈັດຂີ້ເຫຍື້ອຂອງຕົນ.
- ໃນແຕ່ລະໄລຍະ ອົງການຄຸ້ມຄອງສະໜາມກຳຈັດຂີ້ເຫຍື້ອ ສາມາດດັດແກ້ ຫລື ປັບປຸງອັດຕາຄ່າບໍລິການກຳຈັດຂີ້ເຫຍື້ອໄດ້ຕາມຄວາມເໝາະສົມ ໂດຍອີງໃສ່ສະພາບການປ່ຽນແປງຂອງອັດຕາເງິນເຟີ້ ແລະ ສະພາບຄວາມເປັນຈິງຕ່າງໆ.
- ອັດຕາຄ່າບໍລິການກຳຈັດຂີ້ເຫຍື້ອ ທີ່ກຳນົດອອກ ຫລື ປັບປຸງໃໝ່ໃນແຕ່ລະໄລຍະ ຈະຖືກນຳໃຊ້ໄດ້ຢ່າງເປັນທາງການ ກໍ່ຕໍ່ເມື່ອໄດ້ຮັບການອະນຸມັດຈາກເຈົ້າແຂວງ ແລະ ເຈົ້າຄອງນະຄອນຫຼວງ ທີ່ກ່ຽວຂ້ອງ.
- ທຸກອົງການຈັດຕັ້ງທັງພາກລັດ ແລະ ເອກະຊົນ ຕະຫຼອດຮອດປະຊາຊົນທົ່ວໄປ ຕ້ອງຈ່າຍຄ່າບໍລິການກຳຈັດຂີ້ເຫຍື້ອ ຕາມສັນຍາ ຫລື ຕາມສັນຍາໃນເວລາທີ່ຕົນເອງເອົາຂີ້ເຫຍື້ອໄປກຳຈັດ.

## ໝວດທີ 5 - ຫລັກການໃນການດຳເນີນງານຢູ່ສະໜາມກຳຈັດຂີ້ເຫຍື້ອ

### ມາດຕາ 14: ຫລັກການທົ່ວໄປໃນການດຳເນີນງານຢູ່ສະໜາມກຳຈັດຂີ້ເຫຍື້ອ

ອົງການຄຸ້ມຄອງສະໜາມກຳຈັດຂີ້ເຫຍື້ອທີ່ຖືກຫຼັກສຸຂາອະນາໄມແຕ່ລະແຫ່ງ ຕ້ອງຈັດຕັ້ງການຄຸ້ມຄອງ ຫຼື ການດຳເນີນງານຢູ່ສະໜາມ ໃຫ້ສອດຄ່ອງ ຕາມຫຼັກການ ດັ່ງຕໍ່ໄປນີ້:

- ຕ້ອງກຳນົດວັນ ແລະ ເວລາການເປີດ-ປິດສະໜາມກຳຈັດຂີ້ເຫຍື້ອຢ່າງຄັກແນ່ ແລະ ຕ້ອງຮັບບໍລິການກຳຈັດຂີ້ເຫຍື້ອ ຢູ່ໃນໄລຍະຊົ່ວໂມງເຮັດວຽກເທົ່ານັ້ນ.
- ຕ້ອງຈັດໃຫ້ມີພະນັກງານຮັບຜິດຊອບສະໜາມກຳຈັດຂີ້ເຫຍື້ອ ໂດຍໃຫ້ມີຜູ້ປະຈຳການຢູ່ໃນສະໜາມໃນຊົ່ວໂມງເຮັດວຽກ ເພື່ອຕິດຕາມກວດກາ, ບັນ ທຶກຂໍ້ມູນສະຖິຕິຂີ້ເຫຍື້ອ ແລະ ໃຫ້ການແນະນຳວິທີການໃນການກຳຈັດຂີ້ເຫຍື້ອ.
- ການກຳຈັດຂີ້ເຫຍື້ອ ຈະຕ້ອງປະຕິບັດຢູ່ໃນຂອບເຂດຂອງຂຸມກຳຈັດຂີ້ເຫຍື້ອເທົ່ານັ້ນ ແລະ ການນຳໃຊ້ເນື້ອທີ່ຂອງຂຸມກຳຈັດຂີ້ເຫຍື້ອໃນແຕ່ລະວັນ ກໍຕ້ອງກຳນົດຈຸດຄັກແນ່ ແລະ ໃຫ້ເສຍເນື້ອທີ່ໜ້ອຍທີ່ສຸດທີ່ຈະເຮັດໄດ້.

## ມາດຕາ 14: ຫລັກການທົ່ວໄປໃນການດຳເນີນງານຢູ່ສະໜາມກຳຈັດຂີ້ເຫຍື້ອ (ຕໍ່)

- ການກຳຈັດຂີ້ເຫຍື້ອໃຫ້ໃຊ້ວິທີການຝັງປົກດ້ວຍດິນ ຊຶ່ງກ່ອນອື່ນຕ້ອງກວາດທ້ອນ ແລະ ຢຽບແໜ້ນ, ຈາກນັ້ນຈຶ່ງເອົາດິນດີມາປົກ ຄວາມໜາ ຢ່າງໜ້ອຍ 15 ຊັງຕີແມັດແລ້ວຂຶ້ນຢຽບໃຫ້ແໜ້ນດີຕື່ມ.ການຝັງປົກຂີ້ເຫຍື້ອ ຕ້ອງປະຕິບັດຢ່າງໜ້ອຍ 2 ຄັ້ງຕໍ່ອາທິດ.
- ພະນັກງານຮັບຜິດຊອບສະໜາມກຳຈັດຂີ້ເຫຍື້ອ ຕ້ອງຈັດຕັ້ງໃຫ້ມີການເກັບຂີ້ເຫຍື້ອທີ່ຕົກເຮ່ຍຊະຊາຍອ້ອມຮອບສະໜາມກຳຈັດຂີ້ເຫຍື້ອ ຢ່າງໜ້ອຍອາທິດລະຄັ້ງ.
- ຫ້າມຈູດຂີ້ເຫຍື້ອຢູ່ສະໜາມກຳຈັດຂີ້ເຫຍື້ອ, ຖ້າເກີດມີໄຟໄໝ້ ຕ້ອງມອດໃນທັນທີທັນໃດໂລດ ຕ້ອງມີການຕອບສະໜອງນ້ຳຢ່າງພຽງພໍ ເພື່ອນຳໃຊ້ໃນການມອດໄຟ.

## ໝວດທີ 5 - ຫລັກການໃນການດຳເນີນງານ ຢູ່ສະໜາມກຳຈັດຂີ້ເຫຍື້ອ (ຕໍ່)

### ມາດຕາ 15: ການໃຫ້ບໍລິການກຳຈັດຂີ້ເຫຍື້ອ

ໂດຍທົ່ວໄປ ສະໜາມກຳຈັດຂີ້ເຫຍື້ອ ຂອງບັນດາຕົວເມືອງ, ເທດສະບານ ແລະ ກຸ່ມບ້ານຕ່າງໆ ຈະຮັບບໍລິການກຳຈັດແຕ່ລະປະເພດຂີ້ເຫຍື້ອທົ່ວໄປ ຫຼື ຂີ້ເຫຍື້ອຈາກຄົວເຮືອນຕ່າງໆ ເທົ່ານັ້ນ ໂດຍບໍ່ຈຳແນກວ່າຂີ້ເຫຍື້ອດັ່ງກ່າວຈະຖືກສົ່ງມາຈາກສ່ວນບຸກຄົນ, ການຈັດຕັ້ງຂອງລັດ ຫຼື ເອກະຊົນ. ການຮັບບໍລິການກຳຈັດຂີ້ເຫຍື້ອປະເພດອື່ນ ແມ່ນໃຫ້ອີງຕາມເງື່ອນໄຂ ແລະ ຄວາມສາມາດຕົວຈິງຂອງສະໜາມ ແຕ່ລະບ່ອນ.

### ມາດຕາ 16: ການກຳຈັດຂີ້ເຫຍື້ອທາງດ້ານການແພດ

ຂີ້ເຫຍື້ອທາງດ້ານການແພດ ເຊັ່ນ: ຂີ້ເຫຍື້ອຕິດເຊື້ອ, ຂີ້ເຫຍື້ອທີ່ເປັນຂອງມີຄົມ ແລະ ອື່ນໆຕ້ອງໄດ້ກຳຈັດຢູ່ໃນຂຸມກຳຈັດຂີ້ເຫຍື້ອພິເສດ ຊຶ່ງສ້າງຂຶ້ນສະເພາະ ເພື່ອກຳຈັດຂີ້ເຫຍື້ອປະເພດດັ່ງກ່າວ ການກຳຈັດຕ້ອງໄດ້ຝັງປົກດ້ວຍດິນດີໃນທັນທີຖອກຂີ້ເຫຍື້ອລົງໃນຂຸມແລ້ວ ແລະ ຕ້ອງປະຕິບັດໃຫ້ຖືກຕ້ອງຕາມວິທີການທີ່ໄດ້ກຳນົດໄວ້ ໃນຂໍ້ກຳນົດວ່າດ້ວຍການຄຸ້ມຄອງຂີ້ເຫຍື້ອຢູ່ສະຖານທີ່ບໍລິການສາທາລະນະສຸກ ທີ່ກະຊວງສາທາລະນະສຸກວາງອອກ.

## ໝວດທີ 5 - ຫລັກການໃນການດຳເນີນງານ ຢູ່ສະໜາມກຳຈັດຂີ້ເຫຍື້ອ (ຕໍ່)

**ມາດຕາ 17: ການກຳຈັດຂີ້ເຫຍື້ອອັນຕະລາຍ** ຂີ້ເຫຍື້ອອັນຕະລາຍ ເຊັ່ນ: ຂີ້ເຫຍື້ອບັນຈຸສານພິດ, ເຄມີ, ວັດຖຸໄວໄຟ, ວັດຖຸລະເບີດ ແລະ ອື່ນໆ ຕ້ອງໄດ້ກຳຈັດຢູ່ໃນຂຸມກຳຈັດຂີ້ເຫຍື້ອພິເສດທີ່ສ້າງຂຶ້ນສະເພາະ ເພື່ອກຳຈັດຂີ້ເຫຍື້ອປະເພດດັ່ງກ່າວ ແລະ ຕ້ອງປະຕິບັດຕາມວິທີການ ແລະ ຂັ້ນຕອນໃນການກຳຈັດຂີ້ເຫຍື້ອອັນຕະລາຍແຕ່ລະປະເພດຢ່າງເຄັ່ງຄັດ.

### ມາດຕາ 18: ການກຳຈັດຂີ້ເຫຍື້ອຈາກອຸດສາຫະກຳ

- ອົງການຈັດຕັ້ງທີ່ຮັບຜິດຊອບຄຸ້ມຄອງຂີ້ເຫຍື້ອ ຢູ່ບັນດາຕົວເມືອງ ແລະ ກຸ່ມບ້ານໃຫຍ່ຕ່າງໆ ຕ້ອງພົວພັນ ຫຼື ແຈ້ງໃຫ້ຜູ້ຈັດການ ຂອງແຕ່ລະໂຮງງານອຸດສາຫະ ກຳ ຊຶ່ງນອນຢູ່ໃນຕົວເມືອງ ຫຼື ກຸ່ມບ້ານຂອງຕົນ ເພື່ອທຳການສຳຫຼວດ ກ່ຽວກັບການເກີດຂຶ້ນຂອງຂີ້ເຫຍື້ອ ຢູ່ໃນແຕ່ລະໂຮງງານເພື່ອກຳໄດ້ປະເພດ ແລະ ປະລິ ມານຂີ້ເຫຍື້ອສະເລ່ຍປະຈຳວັນທີ່ຈະໄດ້ນຳໄປກຳຈັດ.
- ອີງຕາມຂໍ້ມູນທີ່ໄດ້ຮັບການສຳຫຼວດຂ້າງເທິງນັ້ນ, ອົງການຈັດຕັ້ງທີ່ຮັບຜິດຊອບຄຸ້ມຄອງຂີ້ເຫຍື້ອ ຕ້ອງໄດ້ໃຫ້ຄຳແນະນຳ ແກ່ບໍລິສັດ ແລະ ໂຮງງານຕ່າງໆ ວ່າຈະກຳຈັດຂີ້ເຫຍື້ອອຸດສາຫະກຳ ດັ່ງກ່າວນັ້ນ ດ້ວຍວິທີການໃດ. ຂີ້ເຫຍື້ອ ອາດຈະຖືກກຳຈັດຢູ່ໃນສະໜາມກຳຈັດຂີ້ເຫຍື້ອ ຫຼື ດ້ວຍວິທີການອື່ນ ທີ່ສາມາດປ້ອງກັນສຸຂະພາບ ຂອງຄົນ, ສັດ ແລະ ສິ່ງແວດລ້ອມໄດ້.

## ໝວດທີ 5 - ຫລັກການໃນການດຳເນີນງານ ຢູ່ສະໜາມກຳຈັດຂີ້ເຫຍື້ອ (ຕໍ່)

### ມາດຕາ 19: ການກຳຈັດນ້ຳເປື້ອນຈາກວິດຖ່າຍ ແລະຂີ້ຕົມນ້ຳເປື້ອນ

ຫ້າມນຳເອົານ້ຳເປື້ອນຈາກວິດຖ່າຍ ແລະ ຂີ້ຕົມນຳເປື້ອນທີ່ບໍ່ໄດ້ຜ່ານການບຳບັດໄປກຳຈັດໂດຍກົງຢູ່ຂຸມກຳຈັດຂີ້ເຫຍື້ອທົ່ວໄປ. ຖ້າຕ້ອງການນຳເອົານ້ຳເປື້ອນຈາກວິດຖ່າຍ ແລະ ຂີ້ຕົມນ້ຳເປື້ອນ ໄປກຳຈັດຢູ່ໃນສະໜາມກຳຈັດຂີ້ເຫຍື້ອຕ້ອງປະຕິບັດຕາມເງື່ອນໄຂ ດັ່ງຕໍ່ໄປນີ້:

- ຕ້ອງໄດ້ສ້າງໜອງບຳບັດສະເພາະຢູ່ໃນຂອບເຂດຂອງສະໜາມກຳຈັດຂີ້ເຫຍື້ອ ແລະ ໜອງດັ່ງກ່າວ ຕ້ອງຢູ່ເຂດທີ່ບໍ່ສາມາດໄຫຼຊຶມສູ່ນ້ຳໃຕ້ດິນໄດ້.
- ກໍລະນີ ບໍ່ມີໜອງບຳບັດ ຈະຕ້ອງໄດ້ກະກຽມຂຸມສະເພາະ ແລະ ຕ້ອງຖົມດ້ວຍວັດຖຸພິເສດສະເພາະ (ຂີ້ເຖົ່າ, ຖ່ານ, ດິນຊາຍ...) ໃນທັນທີທີ່ປ່ອຍນ້ຳເປື້ອນຈາກວິດຖ່າຍ ຫລື ຂີ້ຕົມນ້ຳເປື້ອນລົງໄປໃນຂຸມດັ່ງກ່າວແລ້ວ.

## ໝວດທີ 5 - ຫລັກການໃນການດຳເນີນງານ ຢູ່ສະໜາມກຳຈັດຂີ້ເຫຍື້ອ (ຕໍ່)

### ມາດຕາ 20: ການປ້ອງກັນສຸຂະພາບແລະຄວາມປອດໄພຂອງພະນັກງານ

ອົງການທີ່ຄຸ້ມຄອງສະໜາມກຳຈັດຂີ້ເຫຍື້ອຕ້ອງຕິດຕາມຢ່າງຕໍ່ເນື່ອງກ່ຽວກັບສຸຂະພາບແລະຄວາມປອດໄພຂອງພະນັກງານທີ່ເຮັດວຽກຢູ່ໃນສະໜາມກຳຈັດຂີ້ເຫຍື້ອຂອງຕົນເປັນຕົ້ນແມ່ນ:ຕ້ອງໄດ້ຈັດຝຶກອົບຮົມໃຫ້ພະນັກງານດັ່ງກ່າວໄດ້ມີຄວາມເຂົ້າໃຈ ໃນໜ້າທີ່ຮັບຜິດຊອບ,ວິທີການກຳຈັດຂີ້ເຫຍື້ອແລະການອະນາ ໄມທີ່ຖືກຕ້ອງແລະຕ້ອງຕອບສະໜອງອຸປະກອນຮັບໃຊ້ ແລະ ຊຸດປ້ອງກັນແຮງງານ ໃຫ້ແກ່ເຂົາເຈົ້າໃຫ້ເໝາະສົມ.

### ມາດຕາ 21: ການຊອກຄົ້ນເອົາສິ່ງຂອງຈາກກອງຂີ້ເຫຍື້ອ

ອົງການທີ່ຄຸ້ມຄອງສະໜາມກຳຈັດຂີ້ເຫຍື້ອ ອາດຈະອະນຸຍາດໃຫ້ມີການຊອກຄົ້ນເອົາສິ່ງຂອງຈາກກອງຂີ້ເຫຍື້ອ ຢູ່ໃນສະໜາມກຳຈັດຂີ້ເຫຍື້ອຂອງຕົນໄດ້ ແຕ່ຕ້ອງໄດ້ມີມາດຕະການບັງຄັບໃຫ້ຜູ້ທີ່ເຂົ້າມາຊອກຄົ້ນເອົາສິ່ງຂອງນັ້ນມີການປ້ອງກັນສຸຂະພາບ ແລະ ຄວາມປອດໄພຂອງຕົນເອງ ລວມທັງຄວາມເປັນລະບຽບຮຽບຮ້ອຍ ຢູ່ພາຍໃນສະໜາມກຳຈັດຂີ້ເຫຍື້ອ ຢ່າງຄັກແນ່.

## ໝວດທີ 6 - ການປິດສະໜາມກຳຈັດຂີ້ເຫຍື້ອ

### ມາດຕາ 22: ການປິດສະໜາມກຳຈັດຂີ້ເຫຍື້ອບາງສ່ວນ

ເມື່ອເຫັນວ່າ ຂຸມກຳຈັດຂີ້ເຫຍື້ອໃດໜຶ່ງ ຂອງເຂດກຳຈັດຂີ້ເຫຍື້ອ ຫາກບັນຈຸຂີ້ເຫຍື້ອເຕັມຕາມຄວາມສາມາດຂອງມັນແລ້ວອີງການທີ່ຄຸ້ມຄອງສະໜາມກຳຈັດຂີ້ເຫຍື້ອຈະຕ້ອງໄດ້ທຳການປິດຂຸມດັ່ງກ່າວແລ້ວເປີດຂຸມໃໝ່ ເພື່ອຮອງຮັບເອົາຂີ້ເຫຍື້ອທີ່ຈະນຳມາກຳຈັດ. ພາຍໃນເວລາ 6 ເດືອນ ຫຼັງຈາກທີ່ໄດ້ມີການປິດຂຸມກຳຈັດຂີ້ເຫຍື້ອເກີດແລ້ວ ຂຸມດັ່ງກ່າວ ຕ້ອງໄດ້ທຳການປັບໜ້າດິນ, ຢຽບແໜ້ນ ແລະ ປູກຕົ້ນໄມ້ໃສ່ໂດຍໃຫ້ສອດຄ່ອງກັບແຜນດຳເນີນງານ ຫຼື ວິທີການໃນການປິດສະໜາມກຳຈັດຂີ້ເຫຍື້ອ ທີ່ຖືກຮັບຮອງເອົາແລ້ວ.

### ມາດຕາ 23: ການປິດສະໜາມກຳຈັດຂີ້ເຫຍື້ອ

ການປິດສະໜາມກຳຈັດຂີ້ເຫຍື້ອ ແມ່ນການປິດເຂດຈຳກັດຂີ້ເຫຍື້ອທັງໝົດໃນຂຸມກຳຈັດຂີ້ເຫຍື້ອທັງໝົດທີ່ມີ ໄດ້ຖືກນຳໃຊ້ເຕັມຕາມຄວາມສາມາດຂອງມັນແລ້ວ. ການປິດສະໜາມກຳຈັດຂີ້ເຫຍື້ອ ຕ້ອງໄດ້ປະຕິບັດໃຫ້ສອດຄ່ອງກັບແຜນດຳເນີນງານ ຫຼື ວິທີການໃນການປິດສະໜາມກຳຈັດຂີ້ເຫຍື້ອທີ່ດຮັບຮອງເອົາແລ້ວ. ການປິດສະໜາມກຳຈັດຂີ້ເຫຍື້ອ ຕ້ອງໄດ້ຜ່ານການກວດກາ ແລະ ຢັ້ງຢືນຈາກ ພະແນກ ຍທຂ ປະຈຳແຂວງ ຫຼື ນະຄອນຫຼວງ.

## ໝວດທີ 6 - ການປິດສະໜາມກຳຈັດຂີ້ເຫຍື້ອ (ຕໍ່)

### ມາດຕາ 24: ມາດຕະຖານໃນການອອກແບບສຳລັບການປິດສະໜາມກຳຈັດຂີ້ເຫຍື້ອ

ການອອກແບບສຳລັບການປິດສະໜາມກຳຈັດຂີ້ເຫຍື້ອຕ້ອງໄດ້ດຳເນີນໂດຍວິສາວະກອນທີ່ມີຄວາມສາມາດ ແລະ ປະຕິບັດໃຫ້ຖືກຕ້ອງຕາມມາດຕະຖານດັ່ງລຸ່ມນີ້:

- ຊັ້ນສຸດທ້າຍຂອງເຂດກຳຈັດຂີ້ເຫຍື້ອທີ່ເຕັມແລ້ວ ຕ້ອງກວາດ, ຢຽບແໜ້ນ ແລະ ປັບໃຫ້ມີຄວາມເນີນຫຼາຍກວ່າ 3% ຂຶ້ນໄປ ເພື່ອໃຫ້ສາມາດລະບາຍນ້ຳຝົນອອກຈາກບໍລິເວນດັ່ງກ່າວ.
- ຫຼັງຈາກປັບໜ້າດິນແລ້ວ ຕ້ອງໄດ້ຖົມດ້ວຍດິນປູກຝັງ ໃຫ້ມີຄວາມໜາຢ່າງໜ້ອຍ 60 ຊັງຕີແມັດ ຂຶ້ນໄປ, ໃນກໍລະນີທີ່ຈຳເປັນກໍ່ອາດຈະຫຼຸດຄວາມໜາລົງເລັກນ້ອຍ ແຕ່ບໍ່ໃຫ້ຫຼຸດ 30 ຊັງຕີແມັດ.
- ໃຫ້ປູກຫຍ້າ ຫຼື ປູກຕົ້ນໄມ້ປະດັບ ໃສ່ເບື້ອງເທິງຂອງເຂດກຳຈັດຂີ້ເຫຍື້ອດັ່ງກ່າວ.
- ກໍລະນີ ສະໜາມຂີ້ເຫຍື້ອ ມີທີ່ລະບາຍອາຍແກັດ ເວລາຖົມ ຄວນຮັກສາທີ່ລະບາຍອາຍແກັດໄວ້ຄືເກົ່າ.

## ໝວດທີ 6 - ການປິດສະໜາມກຳຈັດຂີ້ເຫຍື້ອ (ຕໍ່)

### ມາດຕາ 25: ການບຳລຸງຮັກສາສະໜາມກຳຈັດຂີ້ເຫຍື້ອພາຍຫລັງປິດການນຳໃຊ້

- ໃນໄລຍະເວລາ 5 ປີ ພາຍຫຼັງການປິດສະໜາມຂີ້ເຫຍື້ອແລ້ວ, ອົງການທີ່ຄຸ້ມຄອງສະໜາມດັ່ງກ່າວ ຕ້ອງຕິດຕາມກວດກາສະພາບສະໜາມ ແລະ ແກ້ໄຂທຸກບັນຫາ ທີ່ເປັນອັນຕະລາຍຕ່າງໆ ຊຶ່ງອາດຈະເກີດຂຶ້ນ.
- ຫຼັງຈາກທີ່ໄດ້ທຳການບຳລຸງຮັກສາພາຍໃນໄລຍະເວລາ 5 ປີ ແລ້ວ ອົງການທີ່ຄຸ້ມຄອງສະໜາມກຳຈັດຂີ້ເຫຍື້ອ ຕ້ອງຈັດຕັ້ງກວດກາ ແລະ ຕີລາຄາສະພາບສະໜາມ. ຄະນະກຳມະການກວດກາ ຕ້ອງລາຍງານ ຕໍ່ພະແນກ ຍທຂ ປະຈຳແຂວງ ຫຼື ນະຄອນຫຼວງຂອງຕົນວ່າ ຈະເຫັນຄວນແຈ້ງໃຫ້ອົງການທີ່ຄຸ້ມຄອງສະໜາມຢຸດຕິການບຳລຸງຮັກສາ ຫຼື ຈະຍັງສືບຕໍ່ບຳລຸງຮັກສາສະໜາມຕໍ່ໄປອີກ ຖ້າຫາກເຫັນວ່າ ມີຄວາມຈຳເປັນເພື່ອປົກປ້ອງສຸຂະພາບຂອງຄົນ, ສັດ ແລະ ສິ່ງແວດລ້ອມ.
- ພາຍຫຼັງທີ່ທ່ານຫົວໜ້າພະແນກ ຍທຂ ທີ່ກ່ຽວຂ້ອງໄດ້ພິຈາລະນາ ແລະ ອອກແຈ້ງການໃຫ້ປະຕິບັດຕິແນວໃດແລ້ວ ອົງການທີ່ຄຸ້ມຄອງສະໜາມຂີ້ເຫຍື້ອ ກໍ່ຕ້ອງໄດ້ເອົາໃຈໃສ່ຈັດຕັ້ງປະຕິບັດຕາມນັ້ນ ຢ່າງເຄັ່ງຄັດ.

## ໝວດທີ 7 - ສະໜາມກຳຈັດຂີ້ເຫຍື້ອອຸດສາຫະກຳຂອງເອກະຊົນ

### ມາດຕາ 26: ການຂໍອະນຸຍາດກໍ່ສ້າງສະໜາມກຳຈັດຂີ້ເຫຍື້ອຂອງເອກະຊົນ

ບໍລິສັດເອກະຊົນ ທີ່ມີຈຸດປະສົງຢາກກໍ່ສ້າງສະໜາມກຳຈັດຂີ້ເຫຍື້ອອຸດສາຫະກຳເປັນຂອງຕົນເອງ ຈະຕ້ອງໄດ້ປະກອບຄຳຮ້ອງຂໍອະນຸຍາດກໍ່ສ້າງສະໜາມກຳຈັດຂີ້ເຫຍື້ອ (ມີແຜນທີ່ຕັ້ງ, ແຜນຜັງກໍ່ສ້າງ ແລະ ບົດລາຍງານ ກ່ຽວກັບການປະເມີນຜົນກະທົບຕໍ່ສິ່ງແວດລ້ອມຄັດຕິດໄປພ້ອມ) ສະເໜີຕໍ່ພະແນກ ຍທຂ ປະຈຳແຂວງ ຫຼື ນະຄອນຫຼວງ ບ່ອນທີ່ຕົນຈະກໍ່ສ້າງສະໜາມນັ້ນ ເພື່ອຄົ້ນຄວ້າພິຈາລະນາ ບົນພື້ນຖານມີການປະສົມປະສານສົມ ທົບກັບພາກສ່ວນທີ່ກ່ຽວຂ້ອງ. ພາຍຫຼັງທີ່ໄດ້ມີຄວາມເຫັນດີເປັນເອກະພາບກັນແລ້ວ ຈຶ່ງນຳສະເໜີ ຕໍ່ທ່ານເຈົ້າແຂວງ ຫຼື ເຈົ້າຄອງນະຄອນຫຼວງ ທີ່ກ່ຽວຂ້ອງຕົກລົງຮັບຮອງເອົາ ຫຼື ອະນຸມັດຕາມລະບຽບຫຼັກການ ທີ່ໄດ້ກຳນົດໄວ້ໃນຂໍ້ກຳນົດສະບັບນີ້.

### ມາດຕາ 27: ການດຳເນີນງານ ແລະການປິດສະໜາມກຳຈັດຂີ້ເຫຍື້ອຂອງເອກະຊົນ

- ກ່ອນຈະເລີ່ມຕົ້ນດຳເນີນວຽກງານ ຢູ່ສະໜາມກຳຈັດຂີ້ເຫຍື້ອອຸດສາຫະກຳຂອງເອກະຊົນ ບໍລິສັດທີ່ຄຸ້ມຄອງສະໜາມດັ່ງກ່າວ ຕ້ອງໄດ້ສ້າງແຜນດຳເນີນງານຢູ່ສະໜາມຂອງຕົນແລ້ວນຳສະເໜີຕໍ່ພະແນກ ຍທຂ ປະຈຳແຂວງ ຫຼື ນະຄອນຫຼວງ ທີ່ກ່ຽວຂ້ອງເພື່ອພິຈາລະນາຮັບຮອງເອົາຢ່າງເປັນທາງການ. ການດຳເນີນງານ ແລະການປິດສະໜາມກຳຈັດຂີ້ເຫຍື້ອ ແມ່ນຕ້ອງຮັບປະກັນໃຫ້ສອດຄ່ອງກັບແຜນດຳເນີນງານຢູ່ສະໜາມ ທີ່ໄດ້ຮັບຮອງເອົາແລ້ວ.
- ໃນກໍລະນີມີການຮັບເອົາຂີ້ເຫຍື້ອອຸດສາຫະກຳຈາກພາກສ່ວນອື່ນມາກຳຈັດ ບໍລິສັດທີ່ຄຸ້ມຄອງສະໜາມສາມາດເກັບຄ່າການບໍລິການຂີ້ເຫຍື້ອ ໃນອັດຕາສົມເຫດສົມຜົນ.

## ໝວດທີ 8 - ການກວດກາ

### ມາດຕາ 28: ການກວດກາສະໜາມກຳຈັດຂີ້ເຫຍື້ອ

ພະແນກ ຍທຂ ປະຈຳແຂວງ ແລະ ນະຄອນຫຼວງ ຕ້ອງຈັດຕັ້ງການກວດກາສະໜາມກຳຈັດຂີ້ເຫຍື້ອທຸກແຫ່ງ ທີ່ມີຢູ່ພາຍໃນທ້ອງຖິ່ນຂອງຕົນຢ່າງເປັນປົກກະຕິ, ຢ່າງໜ້ອຍ 1 ຄັ້ງຕໍ່ປີ (ຈົນກວ່າຈະມີແຈ້ງການໃຫ້ມີການຢຸດເຊົາການບຳລຸງຮັກສາສະໜາມ) ເພື່ອຕິດຕາມກວດກາ ແລະ ຊຸກຍູ້ໃຫ້ອົງການ ທີ່ຄຸ້ມຄອງສະໜາມກຳຈັດຂີ້ເຫຍື້ອປະຕິບັດຕາມຂໍ້ຕົກລົງສະບັບນີ້ຢ່າງເຄັ່ງຄັດ. ໃນການກວດກາແຕ່ລະຄັ້ງ ຄະນະກຳມະການກວດກາ ຕ້ອງເຮັດບົດລາຍງານ ກ່ຽວກັບການກວດກາຢ່າງເປັນລາຍລັກອັກສອນ ແລ້ວນຳສົ່ງໃຫ້ພະແນກ ຍທຂ ເພື່ອພິຈາລະນາ ແລະ ແຈ້ງໄປຍັງອົງການທີ່ຄຸ້ມຄອງສະໜາມກຳຈັດຂີ້ເຫຍື້ອ ເພື່ອທຳການແກ້ໄຂບັນຫາຕ່າງໆທີ່ອາດເກີດຂຶ້ນ ແລະ ພ້ອມດຽວກັນກໍ່ຕ້ອງລາຍງານໃຫ້ອົງການປົກຄອງທ້ອງຖິ່ນແຕ່ລະຂັ້ນທີ່ກ່ຽວຂ້ອງຮັບຊາບນຳ.

### ມາດຕາ 29: ຄະນະກຳມະການກວດກາສະໜາມກຳຈັດຂີ້ເຫຍື້ອ

ຄະນະກຳມະການກວດກາສະໜາມກຳຈັດຂີ້ເຫຍື້ອ ແມ່ນຖືກແຕ່ງຕັ້ງໂດຍທ່ານຫົວໜ້າ ພະແນກ ຍທຂ ປະຈຳແຂວງ ຫຼື ນະຄອນຫຼວງ ທີ່ກ່ຽວຂ້ອງ ໂດຍມີການເຂົ້າຮ່ວມຂອງພະແນກສາທາລະນະສຸກ, ຫ້ອງການວິທະຍາສາດ ເຕັກໂນໂລຊີ ແລະ ສິ່ງແວດລ້ອມ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ຕາມຄວາມເໝາະສົມ. ຄະນະກຳມະການກວດກາ ທີ່ຖືກແຕ່ງຕັ້ງມີສິດເຂົ້າກວດກາສະໜາມກຳຈັດຂີ້ເຫຍື້ອທຸກແຫ່ງຢູ່ໃນທ້ອງຖິ່ນຂອງຕົນ ບໍ່ວ່າຈະຢູ່ໃນການຄຸ້ມຄອງຂອງລັດ ຫຼື ເອກະຊົນ ກໍ່ຕາມ.

## ໝວດທີ 8 - ການກວດກາ (ຕໍ່)

### ມາດຕາ 30: ມາດຕະການຕໍ່ຜູ້ລະເມີດ

- ອົງການທີ່ຄຸ້ມຄອງສະໜາມກຳຈັດຂີ້ເຫຍື້ອ ຕ້ອງຮັບປະກັນວ່າທຸກໆຄົນທີ່ນຳເອົາຂີ້ເຫຍື້ອມາກຳຈັດ ຫຼື ມາຊອກຄົ້ນເກັບສິ່ງຂອງຢູ່ໃນສະໜາມຂອງຕົນ ໄດ້ປະຕິບັດຕາມລະບຽບ ຫຼັກການຕ່າງໆ ດັ່ງທີ່ໄດ້ກຳນົດໄວ້ໃນຂໍ້ກຳນົດສະບັບນີ້. ຕໍ່ຜູ້ລະເມີດແມ່ນຈະຖືກປະຕິບັດມາດຕະການຕ່າງໆ ດັ່ງລຸ່ມນີ້:
- ຖືກກ່າວເຕືອນ ກ່ຽວກັບຄວາມຜິດ ດ້ວຍປາກເປົ່າ ຫຼື ແຈ້ງເປັນລາຍລັກອັກສອນ.
- ຮຽກມາຕັກເຕືອນໃຫ້ແກ້ໄຂຂໍ້ບົກຜ່ອງຂອງຕົນ ແລະ ໃຫ້ເຮັດບົດບັນທຶກໂດຍມີການກຳນົດມາດຕະການປັບໃໝຕ່າງໆເອົາໄວ້.
- ປັບໃໝຕາມມາດຕະການທີ່ກຳນົດໄວ້ ແລະ ແຈ້ງອຳນາດການປົກຄອງເມືອງທີ່ກ່ຽວຂ້ອງຮຽກໄປສຶກສາອົບຮົມ.
- ຖືກງົດບໍ່ໃຫ້ນຳເອົາຂີ້ເຫຍື້ອເຂົ້າມາກຳຈັດ ຫຼື ບໍ່ໃຫ້ເຂົ້າມາຊອກຄົ້ນເກັບສິ່ງຂອງຢູ່ໃນສະໜາມກຳຈັດຂີ້ເຫຍື້ອ.

## ມາດຕາ 30: ມາດຕະການຕໍ່ຜູ້ລະເມີດ (ຕໍ່)

- ເມື່ອກວດພົບວ່າ ອົງການທີ່ຄຸ້ມຄອງສະໜາມກຳຈັດຂີ້ເຫຍື້ອ ໄດ້ມີການດຳເນີນງານ ຫຼື ປິດສະໜາມກຳຈັດຂີ້ເຫຍື້ອ ບໍ່ສອດຄ່ອງກັບແຜນດຳເນີນງານ ຫຼື ວິທີການໃນສະໜາມກຳຈັດຂີ້ເຫຍື້ອ ທີ່ໄດ້ຮັບຮອງເອົາແລ້ວ ຫຼື ໄດ້ມີການລະເມີດຂໍ້ກຳນົດສະບັບນີ້ ພະແນກ ຍທຂ ປະຈຳແຂວງ, ນະຄອນຫຼວງ ມີສິດນຳໃຊ້ມາດຕະການຕ່າງໆ ດັ່ງລຸ່ມນີ້:

➢ ແນະນຳດ້ວຍປາກເປົ່າ ຫຼື ແຈ້ງເປັນລາຍລັກອັກສອນໃຫ້ທຳການປັບປຸງ ຫຼື ແກ້ໄຂບັນຫາຕ່າງໆ ທີ່ອາດຈະເກີດຂຶ້ນ ຖ້າວ່າ ການລະເມີດບໍ່ກໍ່ໃຫ້ເກີດອັນຕະລາຍທີ່ຮ້າຍແຮງ.

➢ ຕັກເຕືອນໃຫ້ທຳການປັບປຸງ ຫຼື ແກ້ໄຂບັນຫາຕ່າງໆ ທີ່ອາດເກີດຂຶ້ນ, ລວມທັງການປັບປຸງການຈັດຕັ້ງຄຸ້ມຄອງສະໜາມກຳຈັດຂີ້ເຫຍື້ອໃຫ້ເຂັ້ມແຂງ ແລະ ມີຄວາມຮັບຜິດຊອບສູງກວ່າເກົ່າຖ້າການລະເມີດໃນລັກສະນະດຽວກັນກັບຄັ້ງທີ່ຜ່ານມາຍັງສືບຕໍ່ອີກ.

➢ ອອກຄຳສັ່ງໃຫ້ປິດສະໜາມກຳຈັດຂີ້ເຫຍື້ອໃນບາງສ່ວນ ຫຼື ທັງໝົດ ເປັນການຊົ່ວຄາວເມື່ອເຫັນວ່າ ການລະເມີດອາດຈະກໍ່ໃຫ້ເກີດອັນຕະລາຍຮ້າຍແຮງຊຶ່ງເປັນການຂົ່ມຂູ່ຕໍ່ສຸຂະພາບຂອງຊຸມຊົນ ຫຼື ສິ່ງແວດລ້ອມ ຈົນກວ່າບັນຫາຕ່າງໆຈະຖືກແກ້ໄຂ.

➢ ສັ່ງໃຫ້ປິດສະໜາມກຳຈັດຂີ້ເຫຍື້ອເປັນການຖາວອນຈົນກວ່າຜູ້ກະທຳຜິດຈະມີການປ່ຽນແປງ ແລະ ປັບປຸງໃຫ້ດີຂຶ້ນ. ຖ້າຫາກການລະເມີດໄດ້ກໍ່ໃຫ້ເກີດຄວາມເສຍຫາຍຢ່າງຫຼວງຫຼາຍແກ່ສາທາລະນະ, ສິ່ງແວດລ້ອມ, ຊັບສິນ, ສຸຂະພາບ ຫຼື ຊີວິດຂອງຜູ້ອື່ນຈະຖືກປັບໃໝ, ໃຊ້ແທນຄ່າເສຍຫາຍ ຫຼື ຖືກດຳເນີນຄະດີຕາມລະບຽບກົດໝາຍ.

## ໝວດທີ 9 - ບົດບັນຍັດສຸດທ້າຍ

### ມາດຕາ 31: ການຈັດຕັ້ງປະຕິບັດ

- ມອບໃຫ້ກົມເຄຫາ ແລະ ຜັງເມືອງ ປະສານສົມທົບກັບບັນດາອົງການຈັດຕັ້ງຂອງລັດທີ່ກ່ຽວຂ້ອງ ອອກບົດແນະນຳດ້ານວິຊາການ ແລະ ມາດຕະຖານເຕັກນິກລະອຽດ ເພື່ອເປັນບ່ອນອີງໃຫ້ແກ່ການຈັດຕັ້ງຄຸ້ມຄອງ ແລະ ກວດກາສະໜາມກຳຈັດຂີ້ເຫຍື້ອ ຢ່າງເປັນເອກະພາບ ຢູ່ໃນຂອບເຂດທົ່ວປະເທດ, ພ້ອມກັນນັ້ນກໍ່ຍັງມີໜ້າທີ່ໃນການຈັດຕັ້ງລົງເຜີຍແຜ່, ຕິດຕາມຊຸກຍູ້ ແລະ ກວດກາການຈັດຕັ້ງປະຕິບັດຢ່າງທົ່ວເຖິງ ແລະ ມີປະສິດທິຜົນ.
- ມອບໃຫ້ພະແນກ ຍທຂ ປະຈຳແຂວງ ແລະ ນະຄອນຫຼວງ ປະສານສົມທົບກັບອຳນາດການປົກຄອງທ້ອງຖິ່ນຂັ້ນຕ່າງໆ ແລະ ບັນດາຂະແໜງການທີ່ກ່ຽວຂ້ອງຈັດຕັ້ງປະຕິບັດຂໍ້ກຳນົດສະບັບນີ້ ໃຫ້ໄດ້ຮັບຜົນດີ ແລະ ເອົາໃຈໃສ່ຈັດຕັ້ງກວດກາ ແລະ ປະເມີນຜົນການຄຸ້ມຄອງສະໜາມກຳຈັດຂີ້ເຫຍື້ອແຫ່ງຕ່າງໆ ຢູ່ພາຍໃນທ້ອງຖິ່ນຂອງຕົນ ຢ່າງເປັນປົກກະຕິ.

## ໝວດທີ 9 - ບົດບັນຍັດສຸດທ້າຍ (ຕໍ່)

- ສຳລັບສະໜາມກຳຈັດຂີ້ເຫຍື້ອເກົ່າ ທີ່ໄດ້ມີການວາງແຜນ, ອອກແບບ ແລະ ກໍ່ສ້າງ ກ່ອນມີການອອກຂໍ້ຕົກລົງສະບັບນີ້ ແມ່ນບໍ່ຈຳເປັນຕ້ອງປະຕິບັດຕາມ ມາດຕາ 06 ຂອງຂໍ້ຕົກລົງສະບັບນີ້.

### ມາດຕາ 32: ຜົນສັກສິດ

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນຳໃຊ້ໄດ້ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປຈົນກວ່າ ຈະມີການປ່ຽນແປງໃໝ່. ທຸກຂໍ້ກຳນົດ, ກົດລະບຽບ ແລະ ຂໍ້ຕົກລົງຕ່າງໆ ຂອງກະຊວງ ແລະ ພະແນກ ຍທຂ ທີ່ຂັດກັບຂໍ້ຕົກລົງສະບັບນີ້ ລ້ວນແຕ່ຖືກຍົກເລີກ.